ພະຍາກອນ ວຽງຈັນ
21–30°C
ວັນພະຫັດ 19/11 · ແจ่มใส

ມະຫາສານ

ลายอัน ◆ MAHAXAN DAILY ◆ mahaxan.com

โฆสะบา
พื้นที่โฆสะบา
44 × 25 มม · ติดต่อ WhatsApp 020 5888 6182

ວັນພະຫັດ 19 ພະຈິກ 2026 · ສະບັບທີ 025 | ສະຫຼຸບຂ່າວປະຈຳວັນພຸດ 18 ພະຈິກ 2026 · 24 ຂ່າວ | 23 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ຂ່າວພາຍໃນ** · 14:22 ໂມງ · ອ່ານ 22 ຄັ້ງ

ເຈົ້າໜ້າທີ່ ກັກຕົວແມ່ຕູ້ 67 ປີ ກໍ່ເຫດປຸ້ນຊິງຊັບ ແລະ ທຳຮ້າຍຮ່າງກາຍ ແມ່ຕູ້ ອາຍຸ 69 ປີ ຈົນເສຍຊີວິດ ຍ້ອນຕິດການພະນັນ ຢາກໄດ້ເງິນມາໃຊ້ໜີ້




ໃນວັນທີ 03 ພະຈິກ 2026 ຜ່ານມານີ້ ໄດ້ຮັບການລາຍງານວ່າມີເຫດການເຫດການປຸ້ນຊັບທຳຮ້າຍຮ່າງກາຍເຮັດໃຫ້ມີຜູ້ເສຍຊີວິດ 1 ຄົນ, ເຫດການດັ່ງກ່າວແມ່ນເກີດຂຶ້ນຢູ່ບ້ານແຈ້ງ ເມືອງທຸລະຄົມ ແຂວງວຽງຈັນ ພາຍຫຼັງໄດ້ຮັບແຈ້ງຄວາມກອງບັນຊາການ ປກສ ເມືອງທຸລະຄົມ ລົງສົມທົບກັບກອງບັນຊາການ ປກສ ແຂວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງລົງເກັບກຳຂໍ້ມູນສະຖານທີ່ເກີດເຫດຕົວຈິງ, ພິບເຫັນຂອງເຄື່ອງກາງ, ຮ່ອງຮອຍການທຳຮ້າຍຮ່າງກາຍໃນສະຖານທີ່ເກີດເຫດ ແລະ ຜ່ານການເກັບກຳຂໍ້ມູນເຫັນ

ຕໍ່ໜ້າ 2

◆ **ຂ່າວຕ່າງປະເທດ** · 13:35 ໂມງ

ນັກດາລາສາດຄົ້ນພົບສັນຍານວິທະຍຸປິດສະໜາ ກະພິບທຸກໆ 8 ນາທີ ຈາກລະບົບດາວຄູ່ຫາຍາກ ຫ່າງຈາກໂລກກ່ວາ 5,000 ປີແສງ



ສັນຍານວິທະຍຸປິດສະໜາທີ່ປາກົດສະຫຼັບຕິດໆ ດັບໆ ໃນທຸກໆ 8 ນາທີ ຖືກລະບຸວ່າມີຕົ້ນກຳເນີດມາຈາກລະບົບດາວຄູ່ທີ່ຫາຍາກ ເຊິ່ງຢູ່ຫ່າງຈາກໂລກຫຼາຍກ່ວາ 5,000 ປີ ແສງ ໂດຍການຄົ້ນພົບຄັ້ງນີ້ເປັນຜົນງານຂອງທີມນັກດາລາສາດ ຈາກມະຫາວິທະຍາໄລ Curtin ແລະ ສູນຄົ້ນຄວ້າດາລາສາດ ວິທະຍຸສາກົນ (ICRAR) ໃນປະເທດອົດສະຕຣາລີ.

ຕໍ່ໜ້າ 2

ໃນສະບັບນີ້

2 ຂ່າວພາຍໃນ
6 ເສດຖະກິດ-ສັງຄົມ
7 ເຫດການ
8 ທ່ອງທ່ຽວ
9 ສາລະໜ້າຮູ້
12 ຂ່າວຕ່າງປະເທດ
20 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
21 ແຈ້ງການ
23 ທ້າຍສະບັບ



◆ **ແຈ້ງການ** · 16:21 ໂມງ

ແຈ້ງການມອດໄຟ ວັນທີ 19,21/11/2026

ອ່ານໜ້າ 21 ▸



◆ **ສາລະໜ້າຮູ້** · 11:30 ໂມງ

ລາຄາຄຳລາວປັບລົງຕາມຕະຫຼາດໂລກ! ຄຳຮູບປະພັນຂາຍອອກ...

ອ່ານໜ້າ 9 ▸



◆ **ຂ່າວຕ່າງປະເທດ** · 10:54 ໂມງ

ແຟຣນໄຊส์ KFC ลายใหญ่ในสะหะลัด ยื่นขໍล้มละลาย ทิ้งมี...

ອ່ານໜ້າ 12 ▸

โฆสะบา
ให้แบธมของท่าน ยู่หน้า 1 ทุกเช้า
โฆสะบาใน มะหาสาน ลายอัน — หนังสือพิม PDF ที่ถ่ายลอดออโตฺด และ ธับทางอีเมอ ทุกเช้า
WhatsApp 020 5888 6182

ເຈົ້າໜ້າທີ ກັກຕົວແມ່ຄູ 67 ປີ ກໍເຫດປຸ້ນຊິ້ງຊັບ ແລະ ທຳຮ້າຍຮ່າ...

(ຕໍ່ຈາກໜ້າ 1)

ວ່າມີ ຜູ້ເສຍຊີວິດຊື່ ນາງ ພິມພອນ ອາຍຸ 69 ປີ, ປະຊາຊົນຢູ່ບ້ານແຈ້ງ ເມືອງທຸລະຄົມ ແຂວງ ວຽງຈັນ ຈາກນັ້ນຈຶ່ງຂຶ້ນບັນຊີເປົ້າໝາຍ, ເກັບກຳຂໍ້ມູນກ່ຽວຂ້ອງເປັນຕົ້ນ ແມ່ນກ້ອງວົງຈອນປິດ, ໂທລະສັບມືຖື, ບຸກຄົນທີ່ເຫັນເຫດການ, ພະຍານອ້ອມຂ້າງ ຕົກໃນມາຮອດວັນທີ 06 ພະຈິກ 2026 ຜ່ານມານີ້ຈຶ່ງສາມາດກັກຕົວຜູ້ຕ້ອງສົງໃສໄດ້ 1 ຄົນ ຊື: ນາງ ຕົ໋ງ ອາຍຸ 67 ປີ, ອາຊີບຊາວນາ, ບ້ານຢູ່ບ້ານແຈ້ງ ເມືອງທຸລະຄົມ ແຂວງວຽງຈັນ ມາທຳການສືບສວນ-ສອບສວນ.

ຜ່ານການສືບສວນ-ສອບສວນຜູ້ກ່ຽວ ໄດ້ໃຫ້ການຮັບສາລະພາບວ່າຕົນເອງ ແມ່ນໄດ້ລົງມືທຳຮ້າຍຮ່າງກາຍ ນາງ ພິມພອນ ຈົນຜູ້ເສຍຊີວິດແທ້ ເຊິ່ງນາງ ຕົ໋ງ ໄດ້ຕໍ່ອະ ຜູ້ເສຍຊີວິດ ວ່າຈະມີຄົນເອົາໄກ່ມາຂາຍໃຫ້ ຈຳນວນຫຼາຍ ພ້ອມທັງໄດ້ຊັກຊວນໄປເອົາໄກ່ນຳກັນ ພໍໄປຮອດຈຸດເກີດເຫດ ຜູ້ກ່ຽວ ໄດ້ອາໃສຕອນທີ່ຜູ້ເສຍຊີວິດເຜີຕົວ ແລະ ປົ້ນຫຼັງໃສ່ຜູ້ກ່ຽວ ຈຶ່ງໄດ້ດຶງຜົມດ້ານຫຼັງຟາດລົງໃສ່ກັບພື້ນດິນແລ້ວຕີບໍລິເວນໃບໜ້າຈົນເຮັດໃຫ້ຜູ້ເສຍຊີວິດສະຫຼົບ ຈາກນັ້ນກໍ່ໄດ້ຄົ້ນເອົາຊັບສິນຢູ່ໃນຖົງເສື້ອມີເງິນຈຳນວນ 2,000,000 ກີບ ແລະ ປົດເອົາຕ້າງຫູລ້ວດຖ້າຍຄຳ ຈຳນວນ 01 ຄູ່ ແລ້ວກໍ່ໄດ້ເອົາຕົວຫຼົບໜີ ລັງຈາກນັ້ນຜູ້ກ່ຽວກໍ່ໄດ້ນຳເອົາຕ້າງຫູດັ່ງກ່າວໄປຂາຍຢູ່ຮ້ານຕະຫຼາດບ້ານເກີນ ສ່ວນແຮງຈູງໃນການກໍ່ເຫດຄັ້ງນີ້ແມ່ນຢາກໄດ້ເງິນໄປໃຊ້ໜີ້ ຍ້ອນຜູ້ກ່ຽວຕິດການພະນັນ, ມີໜີ້ສິນຈຳນວນຫຼາຍ

ປັດຈຸບັນຜູ້ກ່ຽວຖືກເຈົ້າໜ້າທີ່ຕຳຫຼວດ ກອງບັນຊາການ ປກສ ແຂວງວຽງຈັນ ກັກຕົວມາດຳເນີນຄະດີຕາມລະບຽບກົດໝາຍຂອງບ້ານເມືອງໃນຂັ້ນຕໍ່ໄປ.

ຂ່າວ: ປກສ ແຂວງວຽງຈັນ ໂພທິສານ

ນັກດາລາສາດຄົ້ນພົບສັນຍານວິທະຍຸປິດສະໜາ ກະພິບທຸກໆ 8 ...

(ຕໍ່ຈາກໜ້າ 1)

ພາບຈາກ: (ICRAR)

ລະບົບດາວຄູ່ດັ່ງກ່າວມີຊື່ວ່າ GPM J071507−114153 ປະກອບດ້ວຍດາວແຄະຂາວ (White Dwarf) ເຊິ່ງເປັນແກນກາງທີ່ເຫຼືອຈາກດາວທີ່ໝົດອາຍຸໄຂ ແລະ ດາວອີກດວງໜຶ່ງປະເພດ G ທີ່ມີລັກສະນະຄ້າຍຄືດວງອາທິດ ຫຼື ທີ່ເອີ້ນວ່າດາວແຄະເຫຼືອງ (Yellow Dwarf).

ຈຸດທີ່ໜ້າສົນໃຈຄື ດາວແຄະຂາວໃນລະບົບນີ້ໝຸນຮອບຕົວເອງປະມານທຸກໆ 8 ນາທີ ແລະ ປ່ອຍສັນຍານວິທະຍຸອອກມາເປັນຈັງຫວະ. ນັກວິທະຍາສາດລະບຸວ່າ ນີ້ເປັນຄັ້ງທຳອິດທີ່ສາມາດກວດພົບສັນຍານວິທະຍຸລັກສະນະນີ້ຈາກລະບົບດາວທີ່ມີດາວແຄະຂາວໂຄຈອນຮ່ວມກັບດາວປະເພດ G.

ລະບົບດາວທີ່ມີລັກສະນະພິເສດນີ້ ປະກອບດ້ວຍດາວແຄະຂາວປະເພດພັລຊາ (White Dwarf Pulsar) ທີ່ ມີ ຂະໜາດນ້ອຍ ແຕ່ມີພະລັງງານສູງ ໂຄຈອນຮອບດາວອີກດວງໜຶ່ງທີ່ມີຂະໜາດໃຫຍ່ກວ່າ ແລະ ມີລັກສະນະຄ້າຍຄືດວງອາທິດ. ພາບຈາກ: (ICRAR)

ດຣ. Sam McSweeney ນັກວິທະຍາສາດຜູ້ຄົ້ນພົບ ກ່າວວ່າ ສັນຍານທີ່ກວດພົບມີຄວາມຊັດເຈນຫຼາຍພໍທີ່ຈະສາມາດສັງເກດເຫັນດາວແຄະຂາວທີ່ກຳລັງໂຄຈອນຮອບດາວຄູ່ຂອງມັນໄດ້.

ເພື່ອຢືນຢັນການຄົ້ນພົບດັ່ງກ່າວ ທີມວິໄຈໄດ້ປະມວນຜົນຂໍ້ມູນຫຼາຍກວ່າ 100 ຊົ່ວໂມງ ໂດຍໃຊ້ລະບົບຊຸເປີຄອມພິວເຕີທີ່ສູນຄົ້ນຄວ້າ Pawsey ໃນລັດ Western Australia. ການຄົ້ນພົບເລີ່ມຕົ້ນຈາກການໃຊ້ກ້ອງໂທລະທັດ Murchison Widefield Array ເພື່ອສຳຫຼວດທາງຊ້າງເຜືອກ ກ່ອນຈະໃຊ້ກ້ອງໂທລະທັດວິທະຍຸ MeerKAT ໃນປະເທດອາຟຣິກາໃຕ້ ເພື່ອກຳນົດຕຳແໜ່ງຂອງລະບົບດາວຄູ່ໃຫ້ແມ່ນຍຳຫຼາຍຂຶ້ນ.

ກ່ອນໜ້ານີ້ ນັກວິໄຈເຄີຍພົບລະບົບດາວບາງປະເພດທີ່ປ່ອຍສັນຍານວິທະຍຸໃນຮູບແບບຕິດໆ ດັບໆ ເປັນວົງຈອນຄ້າຍຄືກັນ ແຕ່ຍັງບໍ່ສາມາດລະບຸແຫຼ່ງກຳເນີດຂອງສັນຍານໄດ້ຢ່າງຊັດເຈນ. ການຄົ້ນພົບຄັ້ງນີ້ຈຶ່ງຖືເປັນກ້າວສຳຄັນໃນການສຶກສາປະກົດການສັນຍານວິທະຍຸຈາກຫ້ວງອະວະກາດ ແລະ ຊ່ວຍໃຫ້ນັກດາລາສາດເຂົ້າໃຈການປະຕິສຳພັນລະຫວ່າງດາວໃນລະບົບດາວຄູ່ໄດ້ດີຂຶ້ນ.

ທີ່ມາ: ICRAR

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 09:56 ໂມງ · ອ່ານ 12 ຄັ້ງ

ລາວ-ຈີນ ຮ່ວມມືປາບປາມອາຊະຍາກຳ ສົ່ງມອບຜູ້ຖືກຫາຈີນ 74 ຄົນ ທີ່ດ່ານສາກົນບໍ່ເຕ່ນ



ໃນວັນທີ 17 ພະຈິກ 2026 ທີ່ດ່ານສາກົນບໍ່ເຕ່ນ ແຂວງຫຼວງນ້ຳທາ ສປປ ລາວ, ເຈົ້າໜ້າທີ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ສປປ ລາວ ນຳໂດຍ ທ່ານ ພັອ ທະນົງສັກ ເທບພະວົງ ຮອງຫົວໜ້າກົມເສນາທິການ ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບລາວ ໄດ້ສົ່ງມອບຜູ້ຖືກຫາຄົນສັນຊາດຈີນ ຈຳນວນ 74 ຄົນ ໃນຄະດີການສໍ້ໂກງຊັບທາງໂທລະຄົມ ໃຫ້ເຈົ້າໜ້າທີ່ຕຳຫຼວດ ສປ ຈີນ ເພື່ອສືບຕໍ່ດຳເນີນການສືບສວນ-ສອບສວນ ແລະ ດຳເນີນຄະດີຢູ່ ສປ ຈີນ ບົນພື້ນຖານການຊ່ວຍເຫຼືອເຊິ່ງກັນແລະກັນ ລະຫວ່າງ 2 ປະເທດ, ຕາງໜ້າຮັບໂດຍ ທ່ານ ພັອ ຈອງ ຈື ເຊິ່ງ ຫົວໜ້າຄະນະສະເພາະກິດ ແຂວງ ກວາງຊີ ສປ ຈີນ.

ການມອບ-ຮັບດັ່ງກ່າວຜູ້ຖືກຫາດັ່ງກ່າວ ແມ່ນອີງຕາມມາດຕາ 270, 271, 272 ແລະ 273 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບເລກທີ 37/ສພຊ; ກົດໝາຍວ່າການຮ່ວມມືລະຫວ່າງປະເທດທາງອາຍາ ສະບັບເລກທີ 88/ສພຊ; ຜູ້ຖືກຫາຈຳນວນດັ່ງກ່າວ ຖືກເຈົ້າໜ້າທີ່ ສປປ ລາວ ກັກຕົວໄດ້ໃນໄລຍະຜ່ານມາ ຫຼັງຈາກເຈົ້າໜ້າທີ່ວິຊາສະເພາະກະຊວງປ້ອງກັນຄວາມສະຫງົບ ລາວ ໄດ້ຕິດຕາມກວດກາ ແລະ ແກ້ໄຂເປົ້າໝາຍສົງໄສວ່າມີການເຄື່ອນໄຫວ ລະເມີດຕໍ່ກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ຕາມຂໍ້ກ່າວຫາ ບໍ່ເຂົ້າ-ອອກຕາມດ່ານທີ່ທາງການກຳນົດ, ເຮັດວຽກບໍ່ຖືກເປົ້າໝາຍ, ດຳເນີນທຸລະກິດ, ປະກອບອາຊີບ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ລັກລອບຢູ່ ສປປ ລາວ, ໂດຍກຸ່ມຜູ້ຖືກຫາດັ່ງກ່າວ ຖືກກັກຕົວໃນຂໍ້ຫາ ການສໍ້ໂກງຊັບທາງໂທລະຄົມ.

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 20 ໃນສະບັບນີ້

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ
ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ข่าวพายใน · 10:05 โมง · อ่าน 8 ถั้ง

กົมป่าไม้ ຮ่วมกับ AFoCO ภรูมจัดกานฝึกอบรมถูฝึกถับไฟป่าในเขดร้อน ถั้งที 5 ที่เมืองอังวรง



กົมป่าไม้ ກะຊວງกะสิกำ ແລะ ส่งแวดล้อม ร่วมกับอิงกานร่วมมือป่าไม้แห่งอาซี (AFoCO) กะกรูมจัดกานฝึกอบรมถูฝึกด้านกานถับไฟป่าในเขดร้อน ถั้งที 5 (TOTFFS) ในละหว่างวันที 18–29 มังกอน 2027 ที่เมืองอังวรง แขวงวรงจัน โดยได้ธับกานสะໜับสะໜุนจากกะซวงเอิธับ ແລะ กานต่างปะเทด แห่งสาหาละนะลัดฝรั่ง (MOEFA) ແລะ กົมป่าไม้แห่งสาหาละนะลัดเกົาหຼี (KFS).

กานฝึกอบรมถั้งนี แม่นกิดจะกำสำถับพายใต้ไลยะหยัก 2026–2030 ของข้อลิเลิ่มกานถุ้มถองไฟป่าในอาซี (FFMA) เซิ่งมีเป้าหมายเพื่อยิกละดับถวามรู้ ແລะ ทักสะของบุกถะลากอนด้านกานป้องกัน ແລะ ถับไฟป่า พ้อมทังเสิมส้างกานร่วมมือ ແลกป่ຽนปะสบกานละหว่างบันดาปะเทดในพากพื้น.

สำลับกานฝึกอบรมถั้งนี จะมีผู้เข้าร่วมจาก 7 ปะเทด ปะกอบมี บุถาน, กำปูเจย, สปป ลาว, มຽนมา, ฟิลิบปิน, ไท ແລะ หวຽดนาม. กานที่ สปป ลาว ได้ธับภຽดเป็นเจ้าพาบ นอกจากจะเป็นโอกาดให้เจ้าหน้าที่ลาวได้พัดทะนาถวามสามาดโดยกົ่ง แล้ว ยังเป็นกานส่งเสิมบิดบาดของลาวในกานร่วมมือด้านกานจัดกานไฟป่าละดับพากพื้น.

ทุกสุดกานฝึกอบรมไลยะ 2 อาทิด จะปะกอบมีกานธຽนทิดสะดิ, กานจำลองสะถานะกาน ແລะ กานฝึกปะถิบัดถือจิงในพากสะໜาม โดยเน้นใส่กานอิเถาะพืดติกำของไฟป่า, มาดตะกานถวามปอดไพ, เต็กนิกกานถับไฟป่า, กานจุดไฟถอบถุม (Prescribed Burning) ลอมทังกานนำใช้เต็กโนโลซีสะໜับสะໜุนเຊ่น แผนที่พุมสันถาน ແລะ โดธนสำลับอวุกาทานถับไฟป่า.

นอกจากนั้น ผู้เข้าร่วมยังจะได้แลกป่ຽนบิดธຽน ແລะ ปึกสาหาลิก่วกับกานนำถวามรู้ไปถ่ายทอดแล ะขะหยายผืนพายในปะเทดของ ติน เพื่อส้างถูฝึกที่มีถวามคำนาน ແລะ เพิ่มปะสิดทิผืนในกานธับมือกับไฟป่า.

กานจัดฝึกอบรมถั้งนี จึ่งเป็นอีกก้าวสำคันในกานเสิมส้างท่าแธง บุกถะลากอน, พัดทะนาถวามร่วมมือละดับพากพื้น ແລะ ยิกละดับกานป้องกัน ແລะ ถอบคุมไฟป่าให้มีถวามปอดไพ ແລะ มีปะสิดทิผืน อันจะปะกอบส่วนในกานอะนุลักຊับพะยากอนป่าไม้ ແລะ ธักสาส่งแวดล้อมให้ยืนยิ่ง.

ข่าวโดย: กົมป่าไม้

เผียแผ่โดย: พะแนกเต็กโนโลซีข้อมูน-ข่าวสาน, ห้องกานกะซวงกะสิกำ ແລะ ส่งแวดล้อม.

ข่าวพายใน · 09:31 โมง · อ่าน 8 ถั้ง

ปกส เมืองสิบเบ้า มอบอาวุดปืนกว่า 500 กะบอก ແລะ ໜากแตก ให้กะนะธับผิดชอบแขวงห้อพัน



ในวันที 17 พะจิก 2026 นี้, กองบับชากาน ปกส เมืองสิบเบ้า แขวงห้อพัน ได้จัดพิทีมอบ-ธับอาวุดที่ธึบโธมเก็บกู้ได้ ให้แก่กะนะธับผิดชอบเก็บกำอาวุดปืน ແລะ หาดละเบิด ห้องถุ้มถองสำมะโนถือ ແລะ ก่ำส้างธากฐาน ปกส แขวงห้อพัน.

พิทีถั้งก่าว ก่าวมอบโดย ท่าน พัท โพไซ สิไพ หัวหน้ากองบับชากาน ปกส เมืองสิบเบ้า ແລะ ก่าวธับโดย ท่าน พัท สุวันเถม มี้ทองๆ ธองหัวหน้าห้องถุ้มถองสำมะโนถือ ແລะ ก่ำส้างธากฐาน ปกส แขวงห้อพัน พ้อมด้วยกะนะเข้าร่วมเป็นสักขีพิยาน.

ลายกานอาวุด ແລะ หาดละเบิดที่นำมามอบ-ธับในถั้งนี ปะกอบมี:

อาวุดล่าเนื้อ (ปืนแก๊บ): จำนอน 500 กะบอก

ปืนเสิก: จำนอน 9 กะบอก

ໜากแตก: จำนอน 3 ໜ่วย

กานมอบ-ธับถั้งนี แม่นเพื่อเป็นกานจัดตั้งปะติบัดตามแจ้งกานของกะซวงป้องกันถวามสะหงบ อ่าถ้วยกานธึบโธมเก็บกู้อาวุดปืน ແລะ หาดละเบิด ยู่แขวงห้อพัน เพื่อธับปะกันถวามสะหงบปอดไพ ແລะ ถวามเป็นละบຽบธຽบธ้อยในสังคม.

ที่มา: ข่าว ปกส แขวงห้อพัน News

โถสะบา

ลิ้งโถสะบา ใน มะหาสาน ลายอัน

ໜังสือพิม PDF ปะจำอัน · จองเป็นลายอัน, ลายอาทิด หื ลายเดือน · ทิมงานออกแบบให้ฟรี

WhatsApp 020 5888 6182

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 12:00 ໂມງ · ອ່ານ 3 ຄັ້ງ

ຮອງປະທານປະເທດ ຕ້ອນຮັບທູດຍີ່ປຸ່ນ ເຂົ້າຢ້ຽມອຳລາ



ໂອກາດດັ່ງກ່າວ, ທ່ານນາງ ວຽງທອງ ສີພັນດອນ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດໃນການປະຕິບັດໜ້າທີ່ການທູດຂອງ ທ່ານ ໂຄອິຊຸມິ ຊິໂຕມຸ ຊຶ່ງໄດ້ປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນການທູດ ກໍຄື ສົ່ງເສີມການຮ່ວມມືທາງດ້ານຕ່າງໆລະຫວ່າງ ລັດຖະບານ ກໍຄື ປະຊາຊົນຂອງສອງປະເທດ ລາວ-ຍີ່ປຸ່ນ ໃຫ້ໄດ້ຮັບການພັດທະນາ ແລະ ແໜ້ນແຟ້ນຍິ່ງໆຂຶ້ນ. ພ້ອມນີ້, ທ່ານນາງ ວຽງທອງ ສີພັນດອນ ຍັງໄດ້ອວຍພອນໃຫ້ທ່ານທູດ ຈົ່ງກັບຄືນປະເທດດ້ວຍຄວາມສະຫວັດດີພາບ ແລະ ປະສົບຜົນສຳເລັດໃນການປະຕິບັດໜ້າທີ່ໃໝ່ອັນມີກຽດຂອງທ່ານ.

ທ່ານ ໂຄອິຊຸມິ ຊິໂຕມຸ ກໍໄດ້ສະແດງຄວາມຂອບໃຈຕໍ່ທ່ານນາງ ວຽງທອງ ສີພັນດອນ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນໃນຄັ້ງນີ້, ພ້ອມທັງສະແດງຄວາມຂອບໃຈຕໍ່ລັດຖະບານ ກໍຄື ບັນດາການນຳພັກ, ລັດ ຂອງ ສປປ ລາວ, ຕະຫລອດຮອດປະຊາຊົນລາວບັນດາເຜົ່າ ແລະ ທຸກພາກສ່ວນກ່ຽວຂ້ອງທີ່ໄດ້ໃຫ້ການຊ່ວຍເຫລືອ, ສະໜັບສະໜຸນ ແລະ ອຳນວຍຄວາມສະດວກທຸກຢ່າງ ຕະຫລອດໄລຍະການປະຕິບັດໜ້າທີ່ການທູດຂອງຕົນຈົນໄດ້ຮັບຜົນສຳເລັດຢ່າງຈົບງາມ.

ສປປ ລາວ ແລະ ຍີ່ປຸ່ນ ສ້າງສາຍພົວພັນທາງການທູດນຳກັນ ໃນວັນ ທີ 5 ມີນາ 1955.

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 20 ໃນສະບັບນີ້

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ
ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

◆ ເສດຖະກິດ-ສັງຄົມ · 14:50 ໂມງ · ອ່ານ 11 ຄັ້ງ

ສົ່ງອອກກະສິກຳລາວຄຶກຄັກ! ດ່ານຂົວມິດຕະພາບ 1 ສົ່ງອອກບັນລຸ 1.680 ໂຕນ ມູນຄ່າເກືອບ 1,78 ລ້ານໂດລາ



ການສົ່ງອອກສິນຄ້າກະສິກຳ ຜ່ານດ່ານສາກົນຂົວມິດຕະພາບ ລາວ-ໄທ ແຫ່ງທີ 1 ໃນເດືອນຕຸລາ 2026 ມີປະລິມານລວມ 1.680,30 ໂຕນ, ຄິດເປັນມູນຄ່າ 1.776.363 ໂດລາສະຫະລັດ, ໂດຍສິນຄ້າສົ່ງອອກສ່ວນໃຫຍ່ແມ່ນແປ້ງມັນຕົ້ນ, ແປ້ງເຂົ້າໜຽວ, ຢາງພາລາແຜ່ນ, ຢາງພາລາແຫ່ງ, ຢາງພາລາລີ້ງຄອນ ແລະ ແກນສາລີບິດ ເຊິ່ງສົ່ງອອກໄປຍັງ ປະເທດໄທ ແລະ ສປ ຈີນ.

ອີງຕາມຂໍ້ມູນຈາກພະແນກສະຖິຕິກະສິກຳ ແລະ ສິ່ງແວດ ລ້ອມ, ກົມແຜນການ ແລະ ການຮ່ວມມື ໄດ້ລາຍງານວ່າ: ໃນໄລຍະວັນທີ 1-31 ຕຸລາ 2026 ການສົ່ງອອກກຸ່ມພືດ, ຜະລິດຕະພັນພືດ ແລະ ຜະລິດຕະພັນໄມ້ ຜ່ານດ່ານສາກົນ ຂົວມິດຕະພາບ 1 ມີປະລິມານລວມ 1.680,30 ໂຕນ ມູນຄ່າລວມ 1.776.363 ໂດລາສະຫະລັດ. ໃນນັ້ນ, ລາຍການສິນຄ້າທີ່ມີການສົ່ງອອກສຳຄັນ ປະກອບມີ: ແປ້ງເຂົ້າໜຽວ ສົ່ງໄປ ສປ ຈີນ ຈຳນວນ 51 ໂຕນ, ມູນຄ່າ 26.587 ໂດລາສະຫະລັດ; ແປ້ງມັນຕົ້ນ ສົ່ງໄປ ສປ ຈີນ ຈຳນວນ 560 ໂຕນ, ມູນຄ່າ 263.670 ໂດລາສະຫະລັດ; ຢາງພາລາ ແຜ່ນ ຈຳນວນ 210 ໂຕນ ມູນຄ່າ 493.500 ໂດລາສະຫະລັດ ແລະ ຢາງພາລາແຫ່ງ ຈຳນວນ 302 ໂຕນ ມູນຄ່າ 715.176 ໂດລາສະຫະລັດ.

ສ່ວນການສົ່ງອອກໄປປະເທດໄທ ປະກອບມີ: ແປ້ງມັນຕົ້ນ ຈຳນວນ 280 ໂຕນ, ມູນຄ່າ 148.400 ໂດລາສະຫະລັດ ແລະ ແກນສາລີບິດ ຈຳນວນ 155 ໂຕນ, ມູນຄ່າ 46.680 ໂດລາສະຫະລັດ.

ຂໍ້ມູນ-ພາບ: ຂ່າວສານກະສິກຳ

◆ ເສດຖະກິດ-ສັງຄົມ · 15:47 ໂມງ · ອ່ານ 5 ຄັ້ງ

ເປີດໂຄງການກໍ່ສ້າງເສັ້ນທາງ ເບຕົ້ງເສີມເຫຼັກ ເມືອງນາຊາຍທອງ ແລະ ເມືອງໄຊທານີ ມູນຄ່າກວ່າ 400 ຕື້ກີບ



ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ (ຍທຂ ນວ) ຮ່ວມກັບ ບໍລິສັດ ແພງພອນ ກໍ່ສ້າງ ຂົວທາງ ແລະ ຊົນລະປະທານ ຈຳກັດຜູ້ດຽວ ໄດ້ຈັດພິທີເປີດໂຄງການກໍ່ສ້າງເສັ້ນທາງເບຕົ້ງເສີມເຫຼັກຢ່າງເປັນທາງການ ທີ່ຫ້ອງການບ້ານໂພນແກ້ວ ເມືອງນາຊາຍທອງ. ພິທີດັ່ງກ່າວໃຫ້ກຽດເຂົ້າຮ່ວມໂດຍ ທ່ານ ສຸລິຈັນ ພົມມະຫາໄຊ ເລຂາພັກເມືອງນາຊາຍທອງ, ທ່ານ ນາງ ແພງພອນ ຂັນທະຍົງທອງ ປະທານບໍລິສັດ ແພງພອນ ພ້ອມດ້ວຍຄະນະນຳຂັ້ນພະແນກ, ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນເຂົ້າຮ່ວມຢ່າງພ້ອມພຽງ.

ລາຍລະອຽດ 2 ແລວທາງສຳຄັນ (ມູນຄ່າລວມ 400.76 ຕື້ກວ່າກີບ)

ໂຄງການນີ້ມີມູນຄ່າການກໍ່ສ້າງລວມທັງໝົດ 400,765,976,860 ກີບ ເຊິ່ງແບ່ງອອກເປັນ 2 ໄລຍະຫຼັກ ຄື:

ເສັ້ນທາງທີ 1 (ເຊື່ອມຕໍ່ ນາຊາຍທອງ - ໄຊທານີ): ເລີ່ມແຕ່ທາງຫຼວງ 13 ເໜືອ (ບ້ານດົງຫຼວງ) ຫາ ບ້ານດົງຊຽງດີ ແລະ ບ້ານໝອງພະຍາ (ເສັ້ນທາງຕາມມີໄຊ ຫາ ສີເກີດ). ມີລວງຍາວ 9.48 ກິໂລແມັດ, ໜ້າທາງກວ້າງ 12 ແມັດ, ມູນຄ່າ 280.85 ຕື້ກວ່າກີບ.

ເສັ້ນທາງທີ 2 (ພາຍໃນເມືອງນາຊາຍທອງ): ເລີ່ມແຕ່ບ້ານດົງຫຼວງ ຫາ ບ້ານນາຊາຍເໜືອ ແລະ ບ້ານດົງຊຽງດີ. ມີລວງຍາວ 4.84 ກິໂລແມັດ, ໜ້າທາງກວ້າງ 7-12 ແມັດ, ມູນຄ່າ 119.91 ຕື້ກວ່າກີບ.

ມາດຕະຖານການກໍ່ສ້າງ ແລະ ໄລຍະເວລາ

ທ່ານ ທະວີໄຊ ໄຊປະເສີດ ຮອງຫົວໜ້າພະແນກ ຍທຂ ນວ ໄດ້ລາຍງານວ່າ ໂຄງການນີ້ຈະປູດ້ວຍເບຕົ້ງເສີມເຫຼັກໜາ 23 ຊັງຕີແມັດ ພ້ອມລະບົບຮ່ອງລະບາຍນ້ຳ, ທໍ່ລອດທາງ, ໄຟເຍືອງທາງ ແລະ ແຕ້ມເສັ້ນຈະລາຈອນຄົບຊຸດ. ໄລຍະເວລາກໍ່ສ້າງຕາມສັນຍາແມ່ນ 60 ເດືອນ (5 ປີ) ໂດຍປັດຈຸບັນໄດ້ເລີ່ມວັດແທກປັກຫຼັກໝາຍ ແລະ ໄກ່ເກ່ຍສິ່ງກີດຂວາງແລ້ວ.

ຕໍ່ໜ້າ 7

ເປີດໂຄງການກໍ່ສ້າງເສັ້ນທາງ ເບຕົ້ງເສີມເໜັກ ເມືອງນາຊາຍທອ... (ຕໍ່ຈາກໜ້າ 6)

ຄຳໝັ້ນສັນຍາຈາກຜູ້ຮັບເໝົາ

ທ່ານ ນາງ ແພງພອນ ຂັນທະຍິງ ທອງ ໄດ້ຢືນຢັນເຖິງຄວາມມຸ່ງໝັ້ນທີ່ຈະ ເລັ່ງມືກໍ່ສ້າງໃຫ້ສຳເລັດຕາມກຳນົດເວລາ ໂດຍເນັ້ນໃສ່ຄຸນນະພາບຂອງວັດສະດຸ ແລະ ເຕັກນິກທີ່ໄດ້ມາດຕະຖານ ເພື່ອໃຫ້ ເສັ້ນທາງມີຄວາມທົນທານ ຮັບໃຊ້ການ ສັນຈອນ ແລະ ການຄ້າຂາຍຂອງປະຊາຊົນ ໃນໄລຍະຍາວ.

ທີ່ມາ,::ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ

ເຫດການ

◆ **ເຫດການ** · 13:10 ໂມງ · ອ່ານ 10 ຄັ້ງ

ເຈົ້າໜ້າທີ່ກັກຕົວຄົນໄທ 9 ຄົນ ຂໍ້ຫາປ່ອຍເງິນກູ້ຜິດກົດໝາຍ ແລະ ສໍ້ໂກງອອນລາຍ ຂາຍເຄື່ອງ ສົ່ງບັງໜ້າ



ໜ່ວຍສະເພາະກິດ ກະຊວງ ປກສ ສົມທົບກັບ ເຈົ້າໜ້າທີ່ກ່ຽວຂ້ອງໄດ້ລົງເຄື່ອນໄຫວມ້າງ ແລະ ກັກຕົວ ເປົ້າໝາຍທີ່ເປັນຄົນໄທ 9 ຄົນ ໃນວັນທີ 13 ພະຈິກ 2026 ທີ່ບ້ານດົງຄຳຊ້າງ ເມືອງຫາດຊາຍຟອງ ນະຄອນຫຼວງ ວຽງຈັນ ທີ່ໃຊ້ຮູບແບບການເປີດຮ້ານຂາຍເຄື່ອງສົ່ງເປັນສາ ບັງໜ້າ ແຕ່ເບື້ອງຫຼັງລັກລອບກະທຳຜິດກົດໝາຍ ໂດຍມີ ພຶດຕິກຳພົວພັນກັບການປ່ອຍເງິນກູ້ ແລະ ການສໍ້ໂກງທາງ ອິນເຕີເນັດ.

ຈາກການປະຕິບັດງານດັ່ງກ່າວ, ເຈົ້າໜ້າທີ່ສາມາດ ກວດຍຶດຂອງກາງ ແລະ ອຸປະກອນທີ່ໃຊ້ໃນການກະທຳຜິດ ໄດ້ຫຼາຍລາຍການມີຄື: ໂທລະສັບ ຈຳນວນ 14 ໜ່ວຍ, ຄອມພິວເຕີຕັ້ງໂຕະ ຈຳນວນ 5 ໜ່ວຍ, ໄອແພັດ ຈຳນວນ 1 ໜ່ວຍ, ລົດຈັກ ຈຳນວນ 6 ຄັນ, ຢາສູບໄຟຟ້າ ຈຳນວນ 3 ອັນ ແລະ ຄອມພິວເຕີໂນດບຸກ ຈຳນວນ 1 ໜ່ວຍ.

ປັດຈຸບັນ, ເຈົ້າໜ້າທີ່ວິຊາສະເພາະ ກຳລັງເລັ່ງດຳເນີນການສອບສວນ ເພື່ອ ຂະຫຍາຍຜົນຫາຜູ້ຮ່ວມຂະບວນການ ພ້ອມທັງດຳເນີນຄະດີ ແລະ ລົງໂທດຕາມ ລະບຽບກົດໝາຍຢ່າງເຂັ້ມງວດ.

ທີ່ມາ: ຄວາມສະຫງົບ Lao Security News

◆ **ເຫດການ** · 13:51 ໂມງ · ອ່ານ 6 ຄັ້ງ

ຫວິດປີ້ນ! ລົດບັນທຸກນ້ຳໜັກເກີນກຳນົດ ໂຊກດີໄດ້ລົດຈັກຂ້າງທາງຊ່ວຍຄ້ຳໄວ້ທັນ ຢູ່ເມືອງຈຳພອນ



ໃນວັນທີ 18 ພະຈິກ 2026 ນີ້, ໄດ້ເກີດ ເຫດການລົດບັນທຸກຄັນໜຶ່ງເກີດອາການຫ່ຽງຂ້າງ ຈົນ ເກືອບປີ້ນລົງແຄມທາງ ຢູ່ບໍລິເວນເຂດບ້ານຫຼັກ 35, ເມືອງຈຳພອນ, ແຂວງສະຫວັນນະເຂດ.

ຈາກການກວດສອບເບື້ອງຕົ້ນ ຄາດວ່າສາເຫດແມ່ນ ເກີດຈາກການບັນທຸກນ້ຳໜັກເກີນກຳນົດ ຈົນສົ່ງຜົນເຮັດ ໃຫ້ແໜບລົດຫັກ ແລະ ເສຍຫຼັກຫ່ຽງລົງຂ້າງທາງ. ປັດຈຸບັນ, ທີມງານກ່ຽວຂ້ອງໄດ້ລະດົມລົດຈັກຈຳນວນ 3 ຄັນ ເຂົ້າມາຊ່ວຍຄ້ຳຊູລົດບັນທຸກຄັນດັ່ງກ່າວໄວ້ ເພື່ອ ປ້ອງກັນບໍ່ໃຫ້ລົດປີ້ນລົງໄປຫຼາຍກວ່າເກົ່າ ແລະ ກຽມການ ແກ້ໄຂຕໍ່ໄປ.

ທີ່ມາ: ລູກຊາຍໂທນ ລົດໃຊ້ຄົວເຮືອນ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ທ່ອງທ່ຽວ · 10:31 ໂມງ · ອ່ານ 11 ຄັ້ງ

ສຸດປະທັບໃຈ! ຢູທູບເບີຊື່ດັງຄົນອາເຊີໄບຈານ ມອບເງິນສະໜັບສະໜູນແມ່ຄ້າ ທ້ອງຖິ່ນຢູ່ຫຼວງພະບາງ 224 ໂດລາ



ກາຍເປັນເລື່ອງລາວທີ່ສ້າງຮອຍຍິ້ມ ແລະ ຄວາມປະທັບໃຈໃຫ້ກັບຊາວເນັດທັງ ໃນລາວ ແລະ ຕ່າງປະເທດ ຫຼັງຈາກ ດາວ ດ ອັ ກ ຮຸ ນ ຊ າ ດ າ (Davud Akhundzada) ຢູ ທູ ບ ເ ບີ ແ ລ ະ ບລັອກເກີສາຍທ່ອງທ່ຽວຊື່ດັງຄົນອາເຊີໄບ ຈານ ທີ່ມີຜູ້ຕິດຕາມຫຼາຍລ້ານຄົນ ໄດ້ເຜີຍ ແຜ່ຄລິບວິດີໂອໃນລະຫວ່າງການເດີນທາງ ມາທ່ອງທ່ຽວທີ່ແຂວງຫຼວງພະບາງ ປະເທດ ລາວ.

ໃ ນ ຄ ລິ ບ ດັ່ ງ ກ່ າ ວ ທີ່ ມ ີ ຊ ື່ ວ ່ າ " Supporting Local Business - $224 Donation To A Local Lao Vendor In Luang Prabang, Laos", ດາວ ໄດ້ສະແດງໃຫ້ເຫັນເຖິງ ວິຖີຊີວິດ ແລະ ຄວາມເປັນກັນເອງຂອງ ຄົນທ້ອງຖິ່ນ ພ້ອມທັງໄດ້ມອບເງິນ ສະໜັບສະໜູນຈຳນວນ 224 ໂດລາ ສະຫະລັດ (ຫຼື ປະມານ 4,800,000 - 5,000,000 ກີບ) ໃຫ້ກັບພໍ່ຄ້າແມ່ຄ້າ ລາຍຍ່ອຍໃນທ້ອງຖິ່ນ ເພື່ອເປັນການ ຊ່ ວ ຍ ເ ຫ ຼ ື ອ ແ ລ ະ ສ ົ ່ ງ ເ ສ ີ ມ ທ ຸ ລ ະ ກ ິ ດ ຂ ະ ໜ າ ດ ນ ້ ອ ຍ ຂ ອ ງ ຊ າ ວ ບ ້ າ ນ

ການກະທຳດັ່ງກ່າວໄດ້ຮັບສຽງຊື່ນ ຊົມຢ່າງຫຼວງຫຼາຍຈາກຜູ້ຕິດຕາມທົ່ວໂລກ ໂດຍສະເພາະຊາວລາວທີ່ເຂົ້າມາສະແດງ ຄວາມຄິດເຫັນຂອບໃຈໃນຄວາມມີນ້ຳໃຈ ແ ລ ະ ກ ານ ຊ ່ ວ ຍ ເ ຜ ີ ຍ ແ ຜ ່ ພ າ ບ ພ ິ ດ ທ ີ ່ ສ ວ ຍ ງ າ ມ, ອົ ບ ອ ຸ ່ ນ ຂ ອ ງ ກ ານ ທ ່ ອ ງ ທ ່ ຽ ວ ໃ ນ ເ ມ ືອ ງ ມ ໍ ລ ະ ດ ົ ກ ໂ ລ ກ ຫ ຼ ວ ງ ພ ະ ບ າ ງ ໃ ຫ ້ ຊ າ ວ ຕ ່ າ ງ ຊ າ ດ ໄ ດ ້ ຮ ູ ້ ຈ ັ ກ ຫ ຼ າ ຍ ຂ ຶ ້ ນ.

ທີ່ມາ: Davud Akhundzadâ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້

ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 20 ໃນສະບັບນີ້

◆ ສາລະໜ້າຮູ້ · 11:30 ໂມງ · ອ່ານ 14 ຄັ້ງ

ລາຄາຄຳລາວປັບລົງຕາມຕະຫຼາດໂລກ! ຄຳຮູບປະພັນຂາຍອອກ 42.75 ລ້ານກີບ ພ້ອມເປີດສາເຫດຫຼັກທີ່ເຮັດໃຫ້ຄຳຫຼຸດລົງ



ນະຄອນຫຼວງວຽງຈັນ, 18 ພະຈິກ 2026 — ບັນຍາກາດການຊື້-ຂາຍຄຳໃນມື້ນີ້ພົບວ່າ ລາຄາຄຳທັງໃນຕະຫຼາດໂລກ ແລະ ພາຍໃນ ສປປ ລາວ ໄດ້ມີການປັບຕົວລົດລົງຢ່າງຊັດເຈນ ເຊິ່ງສ້າງຄວາມສົນໃຈໃຫ້ກັບນັກລົງທຶນ ແລະ ປະຊາຊົນທີ່ກຳລັງຕິດຕາມລາຄາຄຳຢ່າງໃກ້ຊິດ ໂດຍສາເຫດຫຼັກທີ່ເຮັດໃຫ້ລາຄາຄຳປັບລົງໃນຮອບນີ້ ແມ່ນມາຈາກປັດໃຈກົດດັນທາງເສດຖະກິດໂລກ 3 ປະການສຳຄັນດັ່ງນີ້:

1. ການແຂງຄ່າຂອງສະກຸນເງິນໂດລາສະຫະລັດ

ປັດໄຈທຳອິດທີ່ສົ່ງຜົນກະທົບໂດຍກົງແມ່ນການທີ່ເງິນໂດລາສະຫະລັດປັບຕົວແຂງຄ່າຂຶ້ນຢ່າງຕໍ່ເນື່ອງ ຕາມກົນໄກຂອງຕະຫຼາດການເງິນໂລກ ເມື່ອເງິນໂດລາແຂງຄ່າຂຶ້ນ ຈະເຮັດໃຫ້ຄຳທີ່ຊື້-ຂາຍກັນດ້ວຍສະກຸນເງິນໂດລາມີລາຄາແພງຂຶ້ນສຳລັບນັກລົງທຶນທີ່ຖືສະກຸນເງິນອື່ນ ຈຶ່ງສົ່ງຜົນໃຫ້ຄວາມຕ້ອງການຊື້ຄຳໃນຕະຫຼາດໂລກຊະລໍຕົວລົງ.

2. ຄວາມກັງວົນຕໍ່ນະໂຍບາຍດອກເບ້ຍຂອງທະນາຄານກາງສະຫະລັດ (Fed)

ຫຼັງຈາກທີ່ສະຫະລັດອາເມລິກາໄດ້ເປີດເຜີຍຕົວເລກອັດຕາເງິນເຟີ້ທີ່ອອກມາສູງກວ່າທີ່ຕະຫຼາດຄາດການໄວ້ ເຮັດໃຫ້ນັກລົງທຶນປະເມີນວ່າ ທະນາຄານກາງສະຫະລັດ (Fed) ອາດຈະຍັງຄົງນະໂຍບາຍການເງິນທີ່ເຂັ້ມງວດ ແລະ ຊະລໍການປັບຫຼຸດອັດຕາດອກເບ້ຍອອກໄປອີກ ສະພາວະດັ່ງກ່າວເຮັດໃຫ້ຄຳເຊິ່ງເປັນສິນຊັບທີ່ບໍ່ມີຜົນຕອບແທນໃນຮູບແບບດອກເບ້ຍ ມີຄວາມໜ້າສົນໃຈຫຼຸດລົງ.

3. ແຮງເທຂາຍທຳກຳໄລຂອງນັກລົງທຶນລາຍໃຫຍ່

ນອກຈາກປັດໄຈທາງເສດຖະກິດແລ້ວ ຍັງມີແຮງກົດດັນຈາກການເທຂາຍຄຳເພື່ອທຳກຳໄລໄລຍະສັ້ນ ຫຼັງຈາກທີ່ລາຄາຄຳໄດ້ປັບຕົວສູງຂຶ້ນຕິດຕໍ່ກັນໃນໄລຍະກ່ອນໜ້ານີ້ ກຸ່ມນັກລົງທຶນລາຍໃຫຍ່ຈຶ່ງໄດ້ຕັດສິນໃຈຂາຍຄຳອອກມາເພື່ອຮັກສາກຳໄລ ແລະ ໂຍກຍ້າຍເງິນທຶນໄປສູ່ສິນຊັບອື່ນທີ່ໃຫ້ຜົນຕອບແທນສູງກວ່າໃນຊ່ວງນີ້.

ຈາກປັດໄຈທັງໝົດນີ້ ຈຶ່ງສົ່ງຜົນກະທົບຕໍ່ເນື່ອງມາຍັງລາຄາຄຳພາຍໃນປະເທດ ເຮັດໃຫ້ຮ້ານຄຳຕ່າງໆ ຕ້ອງປັບຫຼຸດລາຄາຊື້-ຂາຍລົງຕາມກົນໄກຕະຫຼາດໂລກ.

ສະຫຼຸບລາຄາຄຳປະຈຳວັນທີ 18.11.2026 (ເວລາ 10:00 ໂມງ): ຈາກ ຮ້ານຄຳພູວົງ

ຄຳຮູບປະພັນ:

ນ້ຳໜັກ 01 ບາດ: ລາຄາຂາຍ 42,759,000 ກີບ | ລາຄາຊື້ 41,647,000 ກີບ

ນ້ຳໜັກ 01 ສະຫຼຶງ: ລາຄາຂາຍ 10,694,000 ກີບ | ລາຄາຊື້ 10,395,000 ກີບ

ຄຳແທ່ງ (KPV GOLD):

ນ້ຳໜັກ 01 ບາດ: ລາຄາຂາຍ 42,650,000 ກີບ | ລາຄາຊື້ 42,120,000 ກີບ

◆ ສາລະໜ້າຮູ້ · 16:18 ໂມງ · ອ່ານ 5 ຄັ້ງ

ແບ້ພູເຂົາ: ຊື່ວ່າແບ້ ແຕ່ບໍ່ແມ່ນ “ແບ້ແທ້” ນັກປີນຜາແຫ່ງອາເມຣິກາເໜືອ ສາມາດປີນໜ້າຜາສູງຊັນ 60 ອົງສາໄດ້ຢ່າງສະບາຍ ພ້ອມທົນຕໍ່ອາກາດໜາວເຢັນໄດ້ເຖິງ -46 ອົງສາ!



ຜາທີ່ສູງຊັນເກືອບຕັ້ງສາກ, ທາງຍ່າງແຄບໆທີ່ມີຄວາມກວ້າງພຽງບໍ່ກີ່ຊັງຕິແມັດ ຫຼືພື້ນຫີນທີ່ຖືກປົກຄຸມດ້ວຍຫິມະ ແລະນ້ຳກ້ອນ ອາດເປັນເສັ້ນທາງທີ່ສັດຈຳນວນຫຼາຍພະຍາຍາມຫຼີກລ່ຽງ. ແຕ່ສຳລັບ “ແບ້ພູເຂົາ” (Mountain Goat) ແລ້ວ ພູມປະເທດເຫຼົ່ານີ້ກັບເປັນບ້ານທີ່ຊ່ວຍໃຫ້ມັນສາມາດດຳລົງຊີວິດ ແລະຫຼົບໜີຈາກສັດຜູ້ລ່າໄດ້.

ແບ້ພູເຂົາມີຊື່ວິທະຍາສາດວ່າ ໂອຣຽມນອສ ອະເມຣິເຄນັສ (Oreamnos americanus) ເປັນສັດກີບຄູ່ໃນວົງສ໌ Bovidae ມີຖິ່ນກຳເນີດສະເພາະຢູ່ຕາມເຂດພູສູງທາງຕາເວັນຕົກຂອງອາເມຣິກາເໜືອ ນັບຕັ້ງແຕ່ລັດອໍຊິງຕັນ, ໄອດາໂຮ ແລະມອນຕານາ ຜ່ານພາກຕາເວັນຕົກຂອງການາດາ ຂຶ້ນໄປຈົນເຖິງເຂດຢູຄອນ ແລະອາລາສກາ.

ໂດຍສ່ວນຫຼາຍພົບເຫັນພວກມັນອາໄສຢູ່ຕາມເຂດພູສູງ Subalpine ແລະ Alpine ເຊິ່ງເປັນພື້ນທີ່ທີ່ເຕັມໄປດ້ວຍໜ້າຜາ, ໂງ່ນຫີນ ແລະເສັ້ນທາງທີ່ສູງຊັນ.

ເຖິງແມ່ນວ່າຊື່ສາມັນຂອງມັນຈະມີຄຳວ່າ “Goat” ຫຼື ແບ້ ກໍຕາມ ແຕ່ສັດຊະນິດນີ້ບໍ່ແມ່ນແບ້ແທ້ໃນສະກຸນ Capra ເຊິ່ງເປັນກຸ່ມທີ່ລວມເຖິງແບ້ປ່າ ແລະບັນພະບຸລຸດຂອງແບ້ລ້ຽງຕາມບ້ານ.

ແຕ່ມັນຈັດຢູ່ໃນກຸ່ມສັດທີ່ເອີ້ນວ່າ “Goat-antelope” ຫຼື ກຸ່ມແບ້-ແອນທິໂລບ ເຊິ່ງມີຄວາມໃກ້ຊິດທາງວິວັດທະນາການກັບສັດຢ່າງ ເລຽງຜາ, ກໍຣັລ (Goral), ຊາມົວ (Chamois) ແລະທາກິນ (Takin) ຫຼາຍກວ່າແບ້ຫໍ່ວໄປ. ແບ້ພູເຂົາຈັດຢູ່ໃນສະກຸນ Oreamnos ແລະເປັນສັດພຽງຊະນິດດຽວທີ່ຍັງມີຊີວິດຢູ່ໃນສະກຸນນີ້. ຊື່ Oreamnos ມາຈາກພາສາກຣີກ ເຊິ່ງມີຄວາມໝາຍກ່ຽວກັບພູເຂົາ ແລະລູກແກະ ສະທ້ອນໃຫ້ເຫັນເຖິງຮູບຮ່າງຂອງມັນທີ່ມີຂົນສີຂາວ ແລະ ວິຖີຊີວິດຢູ່ຕາມພູສູງໄດ້ຢ່າງຊັດເຈນ.

ເຖິງແມ່ນວ່າແບ້ພູເຂົາ ແລະແບ້ລ້ຽງຕາມບ້ານຈະຢູ່ໃນວົງສ໌ Bovidae ແລະ ວົງສ໌ຍ່ອຍ Caprinae ຄືກັນ ແຕ່ສາຍວິວັດທະນາການຂອງພວກມັນໄດ້ແຍກອອກຈາກກັນມາແລ້ວຫຼາຍລ້ານປີ. ສັດທີ່ມີຮູບຮ່າງ ແລະວິຖີຊີວິດໃກ້ຄຽງກັບມັນຫຼາຍກວ່າ ກັບເປັນສັດພູເຂົາໃນທະວີບ

ຕໍ່ໜ້າ 10

ແບ້ພູເຂົາ: ຊື່ວ່າແບ້ ແຕ່ບໍ່ແມ່ນ “ແບ້ແທ້” ນັກປີນຜາແຫ່ງອາເມ... (ຕໍ່ຈາກໜ້າ 9)

ອາຊີ ແລະເອີຣົບ ເຊັ່ນ ຊາມົວ, ກໍຣັລ, ເລງງຜາ ແລະຫາກິນ.

ກົມປະມົງ ແລະສັດປ່າລັດອາລາສກາ ລະບຸວ່າ ແບ້ພູເຂົາເປັນສັດກີບຄູ່ພູເຂົາ ພຽງຊະນິດດຽວໃນອາເມຣິກາເໜືອ ທີ່ຢູ່ໃນກຸ່ມທີ່ໃນອະດີດເອີ້ນວ່າ Rupicaprinae ຫຼື “Rock Goats” ເຊິ່ງມີຈຸດເດັ່ນຄື ເຂົາຄ້ອນຂ້າງສັ້ນ ແລະມີຄວາມສາມາດໃນການດຳລົງຊີວິດຢູ່ໃນພູມປະເທດທີ່ຊະຊະ ແລະສູງຊັນ.

ເຖິງວ່າຈະເປັນສັດຂະໜາດໃຫຍ່ທີ່ມີຂົນສີຂາວໂດດເດັ່ນ ແຕ່ມັນກັບຖືກບັນຍາຍທາງວິທະຍາສາດຄ່ອນຂ້າງຊ້າ ໃນປີ 1816. ຈົນຮອດປັດຈຸບັນ ກົມປະມົງ ແລະສັດປ່າລັດອາລາສກາ ຍັງຈັດໃຫ້ມັນເປັນໜຶ່ງໃນສັດລ້ຽງລູກດ້ວຍນົມຂະໜາດໃຫຍ່ຂອງອາເມຣິກາເໜືອທີ່ມີການສຶກສາໜ້ອຍທີ່ສຸດ.

ຂົນສີຂາວສອງຊັ້ນ ທົນຄວາມໜາວໄດ້ເຖິງ -46°C

ການດຳລົງຊີວິດຢູ່ເໜືອແນວຕົ້ນໄມ້ ໝາຍຄວາມວ່າ ແບ້ພູເຂົາຕ້ອງປະເຊີນກັບລົມແຮງ, ຫິມະ ແລະອຸນຫະພູມຕິດລົບເປັນເວລາດົນ. ດັ່ງນັ້ນ ຮ່າງກາຍຂອງມັນຈຶ່ງຖືກປົກຄຸມດ້ວຍຂົນສອງຊັ້ນ.

ຂົນຊັ້ນໃນ: ເປັນຂົນອ່ອນລະອຽດ ແລະໜາແໜ້ນ ຊ່ວຍກັກເກັບຄວາມຮ້ອນໃນຮ່າງກາຍ.

ຂົນຊັ້ນນອກ: ເປັນຂົນທີ່ຍາວກວ່າ ແລະມີໂຄງສ້າງເປັນໂພງຢູ່ພາຍໃນ ຊ່ວຍປ້ອງກັນລົມ ແລະຄວາມຊຸ່ມຊື່ນ.

ຂົນໃນລະດູໜາວສາມາດຍາວໄດ້ຫຼາຍ. ກົມປະມົງ ແລະສັດປ່າລັດອາລາສກາລະບຸວ່າ ຂົນຕາມແນວສັນຫຼັງ, ສະໂພກ, ບ່າໄຫຼ່ ແລະບາງສ່ວນຂອງຄໍ ອາດຍາວເຖິງ 8 ນິ້ວ ຫຼືຫຼາຍກວ່າ 20 ຊັງຕິແມັດ. ສ່ວນຂົນທີ່ຍາວຕາມຂາ ເຮັດໃຫ້ມັນເບິ່ງຄືກັບສວມກາງເກງຂົນຟູ.

ຂົນເຫຼົ່ານີ້ຊ່ວຍໃຫ້ມັນທົນຕໍ່ອຸນຫະພູມໃນລະດູໜາວທີ່ຕ່ຳເຖິງປະມານ -46 ອົງສາເຊລຊຽດ ແລະລົມແຮງທີ່ມີຄວາມໄວເຖິງປະມານ 160 ກິໂລແມັດຕໍ່ຊົ່ວໂມງ.

ເມື່ອລະດູຮ້ອນມາຮອດ ຂົນທີ່ໜາເຫຼົ່ານີ້ກັບກາຍເປັນພາລະ. ແບ້ພູເຂົາຈຶ່ງເລີ່ມຜັດຂົນປະມານເດືອນມິຖຸນາ ໂດຍມັກຖູຮ່າງກາຍກັບກ້ອນຫີນ ແລະຕົ້ນໄມ້ ເພື່ອກຳຈັດຂົນເກົ່າອອກ. ຈາກນັ້ນຈຶ່ງມີຂົນລະດູຮ້ອນຊຸດໃໝ່ທີ່ສັ້ນ ແລະລຽບກວ່າໃນເດືອນກໍລະກົດ ກ່ອນຈະຄ່ອຍໆ ສ້າງຂົນລະດູໜາວຊຸດໃໝ່ຈົນສົມບູນອີກຄັ້ງໃນປະມານກາງເດືອນຕຸລາ.

ຕົວຜູ້ອາດມີນ້ຳໜັກເກີນ 170 ກິໂລກຣາມ ແຕ່ຍັງຢືນເທິງໜ້າຜາໄດ້

ຮູບຮ່າງພາຍນອກຂອງຕົວຜູ້ ແລະຕົວແມ່ມີຄວາມຄ້າຍຄືກັນຫຼາຍ. ທັງສອງເພດມີຂົນສີຂາວ, ມີເຄົາຢູ່ບໍລິເວນຄາງ, ຫາງສັ້ນ ແລະມີເຂົາສີດຳທີ່ຮຽວຍາວ ໂຄ້ງໄປທາງດ້ານຫຼັງ. ຄວາມແຕກຕ່າງສຳຄັນຢູ່ທີ່ຂະໜາດຮ່າງກາຍ.

ກົມປະມົງ ແລະສັດປ່າລັດອາລາສກາລະບຸວ່າ ຕົວແມ່ເຕັມໄວມີນ້ຳໜັກສະເລ່ຍປະມານ 82 ກິໂລກຣາມ ສ່ວນຕົວຜູ້ມີນ້ຳໜັກສະເລ່ຍປະມານ 127 ກິໂລກຣາມໃນຊ່ວງທ້າຍລະດູຮ້ອນ ຫຼືໃຫຍ່ກວ່າຕົວແມ່ປະມານ 40%.

ຕົວຜູ້ທີ່ເຕັມໄວຫຼາຍຕົວມີນ້ຳໜັກເກີນ 136 ກິໂລກຣາມ ແລະຕົວຜູ້ທີ່ມີຂະໜາດໃຫຍ່ທີ່ສຸດທີ່ໜ່ວຍງານເຄີຍຊັ່ງນ້ຳໜັກໄດ້ນັ້ນ ມີນ້ຳໜັກເຖິງ 385 ປອນ ຫຼືປະມານ 175 ກິໂລກຣາມ.

ສ່ວນ National Geographic ໃຫ້ຂໍ້ມູນວ່າ ແບ້ພູເຂົາມີນ້ຳໜັກໂດຍລວມປະມານ 45–136 ກິໂລກຣາມ ແລະມີຄວາມສູງຈາກພື້ນຮອດບ່າປະມານ 3.5 ຟຸດ ຫຼື 1.07 ແມັດ.

ແຕ່ເຖິງຈະມີນ້ຳໜັກເທົ່າກັບມະນຸດຜູ້ໃຫຍ່ສອງຄົນ ຮ່າງກາຍຂອງມັນກັບສາມາດຊີ້ງຕົວຢູ່ເທິງສັນຫີນທີ່ແຄບຫຼາຍໄດ້ຢ່າງໜ້າທຶ່ງ.

ຄວາມລັບຢູ່ໃຕ້ຝ່າຕີນ: “ເກີບປີນຜາຈາກທຳມະຊາດ”

ຖ້າຂົນໜາເປັນເຄື່ອງມືຮັບມືກັບຄວາມໜາວ ກີບຕີນກໍເປັນອະໄວຍະວະທີ່ຊ່ວຍໃຫ້ແບ້ພູເຂົາສາມາດຄອບຄອງໜ້າຜາໄດ້.

ກີບຕີນຂອງມັນແບ່ງອອກເປັນສອງນິ້ວ ແລະສາມາດກາງອອກຈາກກັນໄດ້ ເພື່ອເພີ່ມພື້ນທີ່ສຳຜັດກັບພື້ນຜິວ ຊ່ວຍກະຈາຍນ້ຳໜັກ ແລະຮັກສາຄວາມສົມດຸນ.

ບໍລິເວນຂອບກີບມີສານເຄຣາຕິນທີ່ແຂງ ຊ່ວຍກ່ຽວກັບຂອບຫີນ ສ່ວນບໍລິເວນກາງກີບມີແຜ່ນເນື້ອທີ່ອ່ອນ ແລະຫຍາບ ຊ່ວຍສ້າງແຮງສຽດທານ ຄ້າຍກັບພື້ນເກີບສຳລັບປີນຜາຕາມທຳມະຊາດ.

ກົມປະມົງ ແລະສັດປ່າລັດອາລາສກາອະທິບາຍວ່າ ໂຄງສ້າງດັ່ງກ່າວຊ່ວຍໃຫ້ແບ້ສາມາດຍຶດເກາະໄດ້ແມ່ນແຕ່ຮອຍແຕກນ້ອຍໆເທິງຫີນແກຣນິດ ພ້ອມທັງເພີ່ມພື້ນທີ່ສຳຜັດກັບພື້ນຜິວໃຫ້ໄດ້ຫຼາຍທີ່ສຸດ.

ນອກຈາກນັ້ນ ປາຍຕີນຍັງມີກີບນ້ອຍດ້ານຫຼັງ (Dewclaw) ທີ່ຊ່ວຍຫຼຸດການລື່ນໄຖລ. ສ່ວນກ້າມຊີ້ນບໍລິເວນບ່າໄຫຼ່ ແລະຄໍທີ່ແຂງແຮງ ກໍຊ່ວຍອອກແຮງດັນຮ່າງກາຍຂຶ້ນຕາມທາງລາດຊັນ.

ມີລາຍງານວ່າ ແບ້ພູເຂົາສາມາດເຄື່ອນທີ່ຢູ່ເທິງທາງລາດທີ່ຊັນຫຼາຍກວ່າ 60 ອົງສາ (ຫຼື ແມ່ນແຕ່ເກືອບ 90 ອົງສາ) ໄດ້ຢ່າງສະບາຍ ແລະ National Geographic ລະບຸວ່າ ມັນສາມາດກະໂດດໄດ້ໄກເກືອບ 12 ຟຸດ ຫຼືປະມານ 3.7 ແມັດໃນການກະໂດດພຽງຄັ້ງດຽວ.

ໜ້າຜາບໍ່ແມ່ນອຸປະສັກ ແຕ່ເປັນກຳແພງປ້ອງກັນສັດຜູ້ລ່າ

ເຫດຜົນທີ່ແບ້ພູເຂົາເລືອກອາໄສຢູ່ໃນພື້ນທີ່ທີ່ເບິ່ງອັນຕະລາຍສຳລັບສັດອື່ນບໍ່ແມ່ນພຽງເພາະມີອາຫານເທົ່ານັ້ນ ແຕ່ໜ້າຜາຍັງເປັນລະບົບປ້ອງກັນຕົວອີກດ້ວຍ.

ສັດຜູ້ລ່າຕາມທຳມະຊາດຂອງມັນມີທັງ ໝາປ່າ, ໝີດຳ, ໝີສີນ້ຳຕານ, ວູລເວີຣິນ, ແມວປ່າລິນຊ໌ ແລະພູມາ. ແຕ່ສັດເຫຼົ່ານີ້ສ່ວນໃຫຍ່ປີນຕາມແບ້ຂຶ້ນໄປເທິງໜ້າຜາສູງຊັນໄດ້ຍາກ.

ດ້ວຍເຫດນີ້ ແບ້ພູເຂົາຈຶ່ງມັກຫຼີກລ່ຽງການລົງໄປຢູ່ເຂດພື້ນທີ່ຕ່ຳ ຍົກເວັ້ນເມື່ອອາຫານຂາດແຄນ, ສະພາບອາກາດບັງຄັບ ຫຼືຈຳເປັນຕ້ອງເດີນທາງໄປຫາແຫຼ່ງແຮ່ທາດ.

ພູມາເປັນໜຶ່ງໃນສັດຜູ້ລ່າທີ່ໜ້າຢ້ານທີ່ສຸດ ເພາະມີພະລັງຫຼາຍພໍທີ່ຈະຈັດການກັບແບ້ທີ່ເຕັມໄວ ແລະຍັງເຄື່ອນທີ່ຕາມພູມປະເທດທີ່ເປັນຫີນໄດ້ຄ່ອງແຄ້ວກວ່າສັດຜູ້ລ່າຂະໜາດໃຫຍ່ຊະນິດອື່ນ.

ສ່ວນລູກແບ້ອາດຕົກເປັນເຫຍື່ອຂອງນົກລ່າສັດຂະໜາດໃຫຍ່ ເຊັ່ນ ນົກອີນຊີຫົວຂາວ ແລະນົກອີນຊີທອງ. ດັ່ງນັ້ນ ແບ້ພູເຂົາຕົວແມ່ຈຶ່ງບໍ່ພຽງແຕ່ພາລູກໜີຂຶ້ນໄປເທິງໜ້າຜາເທົ່ານັ້ນ ແຕ່ຍັງມີພຶດຕິກຳຢືນຢູ່ຕ່ຳກວ່າລູກຕາມທາງລາດຊັນ ເພື່ອຊ່ວຍປ້ອງກັນບໍ່ໃຫ້ລູກພັດຕົກລົງໄປ.

ເຂົາສີດຳບໍ່ໄດ້ມີໄວ້ເພື່ອຄວາມສວຍງາມ ແລະທັງຕົວຜູ້-ຕົວແມ່ກໍມີເຂົາຄືກັນ

ແຕກຕ່າງຈາກສັດກີບບາງກຸ່ມທີ່ມີເຂົາສະເພາະຕົວຜູ້ ແຕ່ແບ້ພູເຂົາທັງຕົວຜູ້ ແລະຕົວແມ່ລ້ວນມີເຂົາຄືກັນ.

ເຂົາຂອງມັນມີສີດຳ, ຮຽວ, ແຫຼມ ແລະໂຄ້ງໄປທາງດ້ານຫຼັງ ມີຄວາມຍາວປະມານ 15–28 ຊັງຕິແມັດ. ເຂົາບໍ່ຫຼຸດຖິ້ມໃນແຕ່ລະປີຄືກັບເຂົາກວາງ ແຕ່ຈະເຕີບໃຫຍ່ຂຶ້ນຢ່າງຕໍ່ເນື່ອງ ແລະເກີດເປັນວົງການເຕີບໂຕ ເຊິ່ງສາມາດນຳມາໃຊ້ຊ່ວຍປະເມີນອາຍຸຂອງມັນໄດ້.

ເຂົາຂອງຕົວແມ່ມີຄວາມຍາວໃກ້ຄຽງກັບຕົວຜູ້ ແຕ່ໂດຍທົ່ວໄປຈະຮຽວກວ່າ ແລະປາຍເຂົາໂຄ້ງໄປທາງຫຼັງຫຼາຍກວ່າ.

ໃນຊ່ວງລະດູຜະສົມພັນ ຕົວຜູ້ຈະໃຊ້ເຂົາຕໍ່ສູ້ກັນເພື່ອແຍ່ງຊິງສິດໃນການຜະສົມພັນກັບຕົວແມ່. ບາດແຜຈາກເຂົາສາມາດຮຸນແຮງໄດ້. ແຕ່ຕົວແມ່ເອງກໍສາມາດໃຊ້ເຂົາໄດ້ຢ່າງມີປະສິດທິພາບບໍ່ແພ້ກັນ ໂດຍສະເພາະເມື່ອຕ້ອງປົກປ້ອງລູກ ຫຼືແຂ່ງຂັນກັບຕົວແມ່ຕົວອື່ນເພື່ອແຍ່ງຊິງພື້ນທີ່ ແລະອາຫານ.

ຄວາມແຫຼມຂອງເຂົາເຮັດໃຫ້ແມ່ນແຕ່ສັດຜູ້ລ່າກໍຕ້ອງລະວັງ. ໃນປີ 2021 ເຄີຍມີກໍລະນີແບ້ພູເຂົາຕົວໜຶ່ງໃນອຸທະຍານແຫ່ງຊາດ Yoho ປະເທດການາດາ ໃຊ້ເຂົາແທງໝີກຣິສລີທີ່ເຂົ້າໂຈມຕີຈົນຕາຍ.

ລະດູຮ້ອນກິນຫຍ້າ ສ່ວນລະດູໜາວມີຫຍັງກໍກິນຕາມທີ່ຫາໄດ້

ແບ້ພູເຂົາເປັນສັດກິນພືດ ແຕ່ບໍ່ໄດ້ມີລາຍການອາຫານຄົງທີ່ຕະຫຼອດທັງປີ.

ໃນລະດູຮ້ອນ ມັນຈະໃຊ້ເວລາຢູ່ຕາມທົ່ງຫຍ້າອັນພຸສູງ ໂດຍກິນຫຍ້າກົກ, ພຶດລົ້ມລຸກ ແລະພຸ່ມໄມ້ເຕ້ຍ. ແຕ່ເມື່ອລະດູໜາວມາຮອດ ແລະຫິມະປົກຄຸມພຶດພັນໃນເຂດພູສູງ ຮູບແບບການກິນອາຫານກໍຈະປ່ຽນຈາກການເລັ່ມຫຍ້າ ມາເປັນການກິນໃບໄມ້ ແລະກິ່ງໄມ້ຫຼາຍຂຶ້ນ.

ອາຫານໃນລະດູໜາວອາດປະກອບມີ ບລູເບີຣີ, ຕົ້ນເຮມລັອກ ແລະໄລເຄນ. ຊະນິດຂອງອາຫານຂຶ້ນຢູ່ກັບວ່າມີພຶດຊະນິດໃດທີ່ຍັງສາມາດຫາກິນໄດ້ ບໍ່ວ່າຈະຢູ່ເໜືອຫິມະ ຫຼືໃຕ້ຫິມະ.

ໂດຍລວມແລ້ວ ອາຫານຂອງມັນປະກອບມີ ຫຍ້າ, ພຶດລົ້ມລຸກ, ຫຍ້າກົກ, ຜັກກຸດ, ມອສ, ໄລເຄນ ລວມເຖິງໃບ ແລະກິ່ງຂອງພຸ່ມໄມ້ ຫຼືຕົ້ນສົນເຕ້ຍ.

ໃນບາງພື້ນທີ່ ແບ້ພູເຂົາຈະເດີນທາງຕາມລະດູການໄປຫາແຫຼ່ງດິນເກືອ ຫຼື Mineral Lick ເພື່ອເລຍແຮ່ທາດ. ການເດີນທາງໃນບາງຄັ້ງອາດຕ້ອງລົງຈາກໜ້າຜາສູງ, ຂ້າມປ່າ ຫຼືເດີນທາງໄກຫຼາຍກິໂລແມັດໄປຫາພື້ນທີ່ຕ່ຳກວ່າ.

ລະດູໜາວອາດຕ້ອງລົງຈາກພູເຂົາ

ຕໍ່ໜ້າ 11

ແບ້ພູເຂົາ: ຊື່ວ່າແບ້ ແຕ່ບໍ່ແມ່ນ “ແບ້ແທ້” ນັກປີນຜາແຫ່ງອາ... (ຕໍ່ຈາກໜ້າ 10)

ເພື່ອເອົາຊີວິດລອດ

ເຖິງແມ່ນວ່າແບ້ພູເຂົາຈະເບິ່ງຄືກັບເຈົ້າຂອງໂລກເໜືອແນວຕົ້ນໄມ້ ແຕ່ລະດູໜາວກໍເປັນບົດທົດສອບຄັ້ງໃຫຍ່ສຳລັບມັນ.

ເມື່ອຫິມະຕົກໜາຈົນປົກຄຸມອາຫານທັງໝົດ ແບ້ພູເຂົາບາງກຸ່ມຈະເຄື່ອນຍ້າຍຈາກເຂດ Alpine ລົງໄປຫາລະດັບຄວາມສູງທີ່ຕ່ຳກວ່າ ໃກ້ກັບແນວຕົ້ນໄມ້ ຫຼື ຕ່ຳກວ່າແນວຕົ້ນໄມ້ ເພື່ອຊອກຫາອາຫານ ແລະພື້ນທີ່ທີ່ຊ່ວຍບັງລົມ.

ໃນເຂດຊາຍຝັ່ງຂອງລັດອາລາສກາ ແບ້ພູເຂົາສາມາດລົງມາໃຊ້ປ່າເກົ່າແກ່ໃນລະດັບຄວາມສູງຕ່ຳເປັນບ່ອນອາໄສໃນລະດູໜາວ. ສ່ວນປະຊາກອນທີ່ຢູ່ໃນເຂດພາຍໃນອາດເລືອກຢູ່ຕາມສັນພູທີ່ມີລົມແຮງ ເພາະລົມສາມາດພັດຫິມະອອກ ເຮັດໃຫ້ຍັງສາມາດຫາພືດທີ່ຢູ່ດ້ານລຸ່ມໄດ້.

ຄວາມສາມາດໃນການປ່ຽນລະດັບຄວາມສູງຕາມລະດູການ ຈຶ່ງມີຄວາມສຳຄັນຫຼາຍ. ເພາະເຖິງວ່າຮ່າງກາຍຂອງມັນຈະທົນຕໍ່ຄວາມໜາວຈັດໄດ້ ແຕ່ຖ້າຫິມະໜາເກີນໄປຈົນບໍ່ສາມາດຫາອາຫານໄດ້ ການຢູ່ເທິງພູສູງຕໍ່ໄປກໍອາດບໍ່ຄຸ້ມກັບພະລັງງານທີ່ຕ້ອງສູນເສຍໄປ.

ກົມປະມົງ ແລະສັດປ່າລັດອາລາສກາລະບຸວ່າ ປະລິມານຫິມະໃນລະດູໜາວເປັນໜຶ່ງໃນປັດໃຈສຳຄັນທີ່ສຸດທີ່ກຳນົດຈຳນວນປະຊາກອນ ເພາະລະດູໜາວທີ່ຮຸນແຮງອາດຫຼຸດອັດຕາການລອດຊີວິດຂອງສັດເຕັມໄວລົງຢ່າງຫຼວງຫຼາຍ.

ຕິວແມ່ຢູ່ເປັນຝູງ ສ່ວນຕິວຜູ້ສ່ວນໃຫຍ່ຢູ່ລຳພັງ

ຮູບແບບການຢູ່ຮ່ວມກັນຂອງແບ້ພູເຂົາມີຄວາມແຕກຕ່າງກັນລະຫວ່າງສອງເພດ.

ຕິວແມ່ ຫຼື Nanny ມັກອາໄສຢູ່ຮ່ວມກັບລູກ ແລະສັດໄວອ່ອນ ລວມຕົວກັນເປັນກຸ່ມລ້ຽງດູລູກ ເຊິ່ງໃນບາງຊ່ວງອາດມີສະມາຊິກຈຳນວນຫຼາຍ. ສ່ວນຕິວຜູ້ ຫຼື Billy ມັກແຍກຕົວອອກໄປຢູ່ລຳພັງ ຫຼືລວມກຸ່ມກັບຕິວຜູ້ອື່ນເປັນກຸ່ມນ້ອຍໆ.

National Geographic ລະບຸວ່າ ກຸ່ມຕິວແມ່ ແລະລູກອາດມີສະມາຊິກປະມານ 20 ຕົວ ສ່ວນຂໍ້ມູນຈາກບາງພື້ນທີ່ພົບວ່າ ກຸ່ມລ້ຽງດູລູກອາດມີຂະໜາດໃຫຍ່ກວ່ານັ້ນອີກ.

ຕິວຜູ້ຈະກັບເຂົ້າມາຫາຕິວແມ່ຫຼາຍຂຶ້ນເມື່ອເຂົ້າສູ່ລະດູຜະສົມພັນ.

ການແຂ່ງຂັນພາຍໃນຝູງບໍ່ໄດ້ເກີດຂຶ້ນສະເພາະຕິວຜູ້ເທົ່ານັ້ນ ເພາະຕິວແມ່ເອງກໍມີລະບົບລຳດັບຊັ້ນທາງສັງຄົມທີ່ຊັດເຈນ ແລະສາມາດຕໍ່ສູ້ກັນເພື່ອແຍ່ງອາຫານ ຫຼືພື້ນທີ່ທີ່ດີໄດ້ ໂດຍກົ້ມຫົວເຂົ້າຫາກັນ ແລະໃຊ້ເຂົາເປັນອາວຸດ.

ໃນບາງຄັ້ງ ການກ້າວຮ້າວລະຫວ່າງຕິວແມ່ອາດຮຸນແຮງກວ່າການປະທະກັນລະຫວ່າງຕິວຜູ້ດ້ວຍຊ້ຳ ເພາະຕິວແມ່ຕ້ອງແຂ່ງຂັນທັງເລື່ອງອາຫານ, ພື້ນທີ່ປອດໄພ ແລະຊັບພະຍາກອນສຳລັບລູກ.

ລະດູຜະສົມພັນ ຕິວຜູ້ເດີນທາງໄກເພື່ອຕາມຫາຕິວແມ່

ລະດູຜະສົມພັນ ຫຼື Rut ເກີດຂຶ້ນປະມານທ້າຍເດືອນຕຸລາ ຫາຕົ້ນເດືອນທັນວາ.

ໃນຊ່ວງນີ້ ຕິວຜູ້ສາມາດເດີນທາງອອກຈາກພື້ນທີ່ທີ່ຕົນອາໄສຢູ່ເປັນປະຈຳໃນໄລຍະທາງໄກ ເພື່ອຕາມຫາຕິວແມ່ທີ່ພ້ອມຜະສົມພັນ. ລະບົບການຜະສົມພັນໂດຍທົ່ວໄປເປັນແບບ Polygynous ໝາຍຄວາມວ່າ ຕິວຜູ້ໜຶ່ງຕິວສາມາດຜະສົມພັນກັບຕິວແມ່ໄດ້ຫຼາຍຕິວ.

ຕິວຜູ້ທີ່ມີອາຍຸປະມານ 5–10 ປີ ມັກມີບົດບາດໃນການສືບພັນຫຼາຍທີ່ສຸດ ເພາະມີທັງຂະໜາດຮ່າງກາຍ ແລະປະສົບການພຽງພໍໃນການແຂ່ງຂັນກັບຕິວຜູ້ອື່ນ.

ກ່ອນການຜະສົມພັນ ຕິວຜູ້ອາດຈ້ອງເບິ່ງຕິວແມ່ເປັນເວລາດົນ, ຂຸດພື້ນດິນເປັນຫຼຸມເພື່ອສະແດງພຶດຕິກຳໃນຊ່ວງ Rut ແລະແຂ່ງຂັນກັນດ້ວຍການຂົ່ມຂູ່ ຫຼື ໃຊ້ເຂົາປະທະກັນ.

ເຖິງແມ່ນວ່າເຂົາຂອງມັນຈະເບິ່ງສັ້ນກວ່າສັດກີບຫຼາຍຊະນິດ ແຕ່ປາຍເຂົາທີ່ຮຽວແຫຼມສາມາດສ້າງບາດແຜເລິກໄດ້. ການຕໍ່ສູ້ຈຶ່ງອາດຈົບລົງດ້ວຍການບາດເຈັບຈາກເຂົາໃນບາງຄັ້ງ.

ຕັ້ງທ້ອງປະມານ 6 ເດືອນ ໂດຍສ່ວນໃຫຍ່ອອກລູກພຽງຄັ້ງລະໜຶ່ງຕິວ

ຫຼັງຈາກຜະສົມພັນ ຕິວແມ່ຈະຕັ້ງທ້ອງປະມານ 180 ວັນ ຫຼືປະມານ 6 ເດືອນ.

ເມື່ອໃກ້ຄອດໃນຊ່ວງກາງຫາທ້າຍເດືອນພຶດສະພາ ຕິວແມ່ຈະແຍກອອກຈາກຝູງ ແລະເລືອກພື້ນທີ່ຂຸຂະ ຫຼືໜ້າຜາທີ່ຄ່ອນຂ້າງໂດດດ່ຽວເພື່ອຄອດລູກ ເຊິ່ງຊ່ວຍຫຼຸດໂອກາດທີ່ສັດຜູ້ລ່າຈະເຂົ້າເຖິງໄດ້ງ່າຍ.

ໂດຍທົ່ວໄປ ມັນຈະອອກລູກຄັ້ງລະ 1 ຕົວ ສ່ວນລູກແຝດພົບໄດ້ຂ້ອນຂ້າງໜ້ອຍ. ລູກແບ້ເກີດໃໝ່ມີນ້ຳໜັກປະມານ 3 ກິໂລກຣາມກວ່າໆ ແຕ່ບໍ່ມີເວລາໃຫ້ອ່ອນແອໄດ້ດົນ ເພາະພຽງບໍ່ຈັກຊົ່ວໂມງຫຼັງເກີດ ມັນກໍເລີ່ມລຸກຂຶ້ນຢືນ, ຍ່າງ, ແລ່ນ ແລະທົດລອງປີນຕາມແມ່ແລ້ວ.

National Geographic ລະບຸວ່າ ລູກແບ້ຕ້ອງສາມາດຢືນໄດ້ພາຍໃນເວລາພຽງບໍ່ຈັກນາທີຫຼັງຄອດ ເພາະສະພາບແວດລ້ອມເທິງພູເຂົາເປັນພື້ນທີ່ເປີດໂລ່ງ ແລະເຕັມໄປດ້ວຍອັນຕະລາຍ.

ຫຼັງຈາກນັ້ນ ແມ່ແບ້ທີ່ມີລູກຈະກັບມາລວມກຸ່ມລ້ຽງດູລູກ. ລູກແບ້ມັກຕິດຕາມແມ່ຢ່າງໃກ້ຊິດຕະຫຼອດປີທຳອິດ ແລະບາງຕົວອາດຢູ່ກັບແມ່ຕໍ່ໄປອີກຫຼາຍປີ.

ໂດຍທົ່ວໄປ ຕິວແມ່ຈະມີລູກຕົວທຳອິດເມື່ອມີອາຍຸປະມານ 3–4 ປີ ເຊິ່ງຖືວ່າຂ້ອນຂ້າງຊ້າເມື່ອທຽບກັບສັດລ້ຽງລູກດ້ວຍນົມຂະໜາດນ້ອຍ.

ເຕີບໃຫຍ່ຊ້າ ມີລູກໜ້ອຍ ເຮັດໃຫ້ປະຊາກອນຟື້ນຕົວຊ້າ

ຮູບແບບການສືບພັນຂອງແບ້ພູເຂົາສົ່ງຜົນໂດຍກົງຕໍ່ການອະນຸລັກສາຍພັນ.

ຕິວແມ່ເລີ່ມສືບພັນຂ້ອນຂ້າງຊ້າ, ໃຊ້ເວລາຕັ້ງທ້ອງເຖິງເຄິ່ງປີ ແລະສ່ວນໃຫຍ່ອອກລູກພຽງຄັ້ງລະໜຶ່ງຕົວ. ດັ່ງນັ້ນ ເມື່ອປະຊາກອນສູນເສຍສັດເຕັມໄວຈຳນວນຫຼາຍ ບໍ່ວ່າຈະຍ້ອນລະດູໜາວຮຸນແຮງ, ການລ່າ ຫຼືການລັບກອນ ການເພີ່ມຈຳນວນກັບຄືນມາຈະຕ້ອງໃຊ້ເວລາຫຼາຍປີ.

ກົມປະມົງ ແລະສັດປ່າລັດອາລາສກາລະບຸວ່າ ໃນບາງພື້ນທີ່ທີ່ປະເຊີນກັບລະດູໜາວຮຸນແຮງຕິດຕໍ່ກັນ ປະຊາກອນແບ້ພູເຂົາສາມາດຫຼຸດລົງໄດ້ຢ່າງຫຼວງຫຼາຍ. ຕົວຢ່າງເຊັ່ນ ເຂດ Lynn Canal ຈາກການຕິດຕາມພົບວ່າ ປະຊາກອນຫຼຸດລົງປະມານ 45% ພາຍໃນໄລຍະ 5 ປີ ທີ່ມີລະດູໜາວຮຸນແຮງຫຼາຍຄັ້ງ.

ອັດຕາການລອດຊີວິດຂອງຕິວແມ່ທີ່ເຕັມໄວແລ້ວຈຶ່ງມີຄວາມສຳຄັນຫຼາຍ. ເພາະການສູນເສຍແມ່ແບ້ໜຶ່ງຕົວ ບໍ່ໄດ້ໝາຍເຖິງພຽງການສູນເສຍສັດໜຶ່ງຕົວເທົ່ານັ້ນ ແຕ່ຍັງໝາຍເຖິງລູກໃນອະນາຄົດທີ່ຈະບໍ່ເກີດຂຶ້ນອີກຫຼາຍຮຸ່ນ.

ດ້ວຍເຫດນີ້ ການຈັດການການລ່າສັດໃນລັດອາລາສກາຈຶ່ງໃຫ້ຄວາມສຳຄັນເປັນພິເສດຕໍ່ການຈຳກັດການລ່າຕິວແມ່.

ອາຍຸສ່ວນໃຫຍ່ບໍ່ເກີນ 12 ປີ ແຕ່ບາງຕົວມີຊີວິດໄດ້ເຖິງ 18 ປີ

National Geographic ລະບຸວ່າ ແບ້ພູເຂົາມີອາຍຸສະເລ່ຍໃນທຳມະຊາດປະມານ 9–12 ປີ. ສ່ວນກົມປະມົງ ແລະສັດປ່າລັດອາລາສກາລະບຸວ່າ ບາງຕົວສາມາດມີຊີວິດຢູ່ໄດ້ເຖິງປະມານ 18 ປີ ແຕ່ສ່ວນໃຫຍ່ມີອາຍຸບໍ່ເຖິງ 12 ປີ.

ໃນສັດທີ່ມີອາຍຸຫຼາຍ ປັດໃຈສຳຄັນຢ່າງໜຶ່ງທີ່ຈຳກັດອາຍຸຂອງມັນຄື ແຂ້ວທີ່ຄ່ອຍໆສຶກຫຼ່ໄປຕາມອາຍຸ ເພາະການກິນພືດທີ່ຫຍາບຢ່າງຕໍ່ເນື່ອງ ເຮັດໃຫ້ປະສິດທິພາບໃນການບົດອາຫານຫຼຸດລົງ.

ແຕ່ກ່ອນຈະເຖິງໄວຊະລາ ແບ້ພູເຂົາຍັງຕ້ອງຜ່ານອັນຕະລາຍອີກຫຼາຍຢ່າງ ທັງສັດຜູ້ລ່າ, ຫິມະຖະຫຼົ່ມ, ລະດູໜາວຮຸນແຮງ ແລະອຸບັດຕິເຫດຈາກພູມປະເທດທີ່ມັນອາໄສຢູ່ເພື່ອຄວາມປອດໄພ.

ຂໍ້ມູນທີ່ລວບລວມໃນລັດອາລາສກາພົບວ່າ ຫິມະຖະຫຼົ່ມອາດເປັນສາເຫດຂອງການຕາຍຂອງແບ້ພູເຂົາຕັ້ງແຕ່ 23–65% ໃນບາງພື້ນທີ່ ໂດຍຂຶ້ນຢູ່ກັບພູມປະເທດ ແລະສະພາບຂອງຫິມະ.

ຈຶ່ງເກີດເປັນຄວາມຂັດແຍ່ງທີ່ໜ້າສົນໃຈວ່າ ໜ້າຜາທີ່ຊ່ວຍປົກປ້ອງມັນຈາກສັດຜູ້ລ່າ ກັບກາຍເປັນສະຖານທີ່ທີ່ຫິມະຖະຫຼົ່ມ ແລະສະພາບອາກາດຮຸນແຮງສາມາດພາຊີວິດຂອງມັນໄປໄດ້ເຊັ່ນກັນ.

ປະຊາກອນສ່ວນໃຫຍ່ຂອງໂລກຢູ່ໃນລັດອາລາສກາ ແລະບຣິຕິຊໂຄລໍາເບຍ

ຖິ່ນກຳເນີດຕາມທຳມະຊາດຂອງແບ້ພູເຂົາຢູ່ຕາມເທືອກເຂົາທາງຕາເວັນຕົກສຽງເໜືອຂອງອາເມຣິກາເໜືອ ນັບຕັ້ງແຕ່ເທືອກເຂົາ Cascade ແລະ Rocky ຜ່ານລັດບຣິຕິຊໂຄລໍາເບຍ, ອັນເບີຕາ ແລະຢູຄອນ ໄປຈົນເຖິງອາລາສກາຕອນຕາເວັນອອກສຽງໃຕ້ ແລະຕອນກາງທາງໃຕ້.

ກົມປະມົງ ແລະສັດປ່າລັດອາລາສກາລະບຸວ່າ ແບ້ພູເຂົາສ່ວນໃຫຍ່ຂອງໂລກພົບຢູ່ໃນເຂດອາລາສກາຕອນຕາເວັນອອກສຽງໃຕ້ ແລະບຣິຕິຊໂຄລໍາເບຍ.

ສະເພາະໃນລັດອາລາສກາ ມີການປະເມີນວ່າມີປະຊາກອນແບ້ພູເຂົາປະມານ 24,000–33,500 ຕົວ ໂດຍມີຫຼາຍກວ່າ 13,500–20,000 ຕົວອາໄສຢູ່ໃນເຂດຕອນຕາເວັນອອກສຽງໃຕ້ຂອງລັດ.

ນອກຈາກເຂດຖິ່ນກຳເນີດດັ້ງເດີມແລ້ວ ມະນຸດຍັງເຄີຍນຳແບ້ພູເຂົາໄປປ່ອຍໃນຫຼາຍພື້ນທີ່ ເຊັ່ນ: ລັດໂຄໂລຣາໂດ, ຢູ

ຕໍ່ໜ້າ 12

ແບ້ພູເຂົາ: ຊື່ວ່າແບ້ ແຕ່ບໍ່ແມ່ນ “ແບ້ແທ້” ນັກປີນຜາແຫ່ງອາ... (ຕໍ່ຈາກໜ້າ 11)

ທາ, ເນວາດາ, ອໍເຣກອນ, ເຊົາດາໂກຕາ ແລະບາງພື້ນທີ່ຂອງລັດວໍຊິງຕັນ. ສິ່ງຜົນໃຫ້ປັດຈຸບັນມີປະຊາກອນແບ້ພູເຂົາຢູ່ນອກຖິ່ນກຳເນີດໃນຫຼາຍລັດ.

ບາງພື້ນທີ່ປະສົບຜົນສຳເລັດຢ່າງຫຼາຍ ເຊັ່ນ ລັດຢູທາ ເຊິ່ງ National Geographic ລະບຸວ່າ ຈາກການປ່ອຍແບ້ພູເຂົາພຽງ 6 ຕົວໃນຊ່ວງທ້າຍທົດສະວັດ 1960 ປະຊາກອນໄດ້ເພີ່ມຂຶ້ນຈົນມີຫຼາຍກວ່າ 2,000 ຕົວ. ໜ່ວຍງານທີ່ກ່ຽວຂ້ອງຈຶ່ງຕ້ອງຈັບຍ້າຍບາງສ່ວນໄປຍັງພື້ນທີ່ອື່ນ ເມື່ອຈຳນວນເພີ່ມຂຶ້ນຈົນເກີນຄວາມສາມາດຂອງຖິ່ນອາໄສ.

ຍັງຢູ່ໃນສະຖານະຄວາມສ່ຽງຕ່ຳ ແຕ່ບໍ່ໄດ້ປອດໄພໃນທຸກພື້ນທີ່

ປັດຈຸບັນ ແບ້ພູເຂົາຖືກຈັດຢູ່ໃນສະຖານະ Least Concern (LC) ຫຼື ຄວາມສ່ຽງຕ່ຳ. ພາບລວມປະຊາກອນທົ່ວໂລກຖືກປະເມີນວ່າຍັງຄ່ອນຂ້າງຄົງທີ່ ແຕ່ການປະເມີນໃນລະດັບໂລກບໍ່ໄດ້ໝາຍຄວາມວ່າ ປະຊາກອນໃນທຸກພື້ນທີ່ຈະມີຄວາມແຂງແຮງເທົ່າກັນ.

ກົມປະມົງ ແລະສັດປ່າລັດອາລາສກາລະບຸວ່າ ປະຊາກອນຫຼາຍແຫ່ງມີຈຳນວນໜ້ອຍ ແລະຖືກແຍກອອກຈາກກັນຕາມເທືອກເຂົາ ຈຶ່ງມີຄວາມສ່ຽງຕໍ່ລະດູໜາວທີ່ຮຸນແຮງ ແລະການລ່າສັດ. ແນວໂນ້ມຈຳນວນປະຊາກອນຈຶ່ງອາດແຕກຕ່າງກັນຢ່າງຫຼວງຫຼາຍໃນແຕ່ລະພື້ນທີ່ ແລະແຕ່ລະປີ.

ການຕັດໄມ້ໃນເຂດປ່າທີ່ຢູ່ລະດັບຕ່ຳ ອາດຫຼຸດພື້ນທີ່ອາໄສທີ່ສຳຄັນໃນຊ່ວງລະດູໜາວ. ຂະນະທີ່ກິດຈະກຳການຂຸດຄົ້ນແຮ່ທາດ, ການສ້າງຖະໜົນ ແລະ ໂຄງການໄຟຟ້າພະລັງນ້ຳ ອາດລົບກວນ ຫຼື ແບ່ງແຍກເສັ້ນທາງການເຄື່ອນຍ້າຍຂອງພວກມັນ.

ອີກປັດໄຈໜຶ່ງທີ່ອາດເບິ່ງຄືບໍ່ກ່ຽວຂ້ອງ ກໍຄືເຮລິຄອບເຕີ. ກົມປະມົງ ແລະສັດປ່າລັດອາລາສກາລະບຸວ່າ ແບ້ພູເຂົາມີຄວາມໄວຕໍ່ການລົບກວນຈາກກິດຈະກຳອຸດສາຫະກຳຫຼາຍກວ່າສັດປ່າຫຼາຍຊະນິດ ບໍ່ວ່າຈະເປັນສຽງລະເບີດ, ການບິນຂອງເຮລິຄອບເຕີ ລວມເຖິງກິດຈະກຳທ່ອງທ່ຽວແບບຊົມວິວຈາກທາງອາກາດ ແລະການຫຼິ້ນສະກີລົງຈາກພູໂດຍໃຊ້ເຮລິຄອບເຕີ (Heliskiing).

ເມື່ອສັດຕົກໃຈແລ້ວໜີອອກຈາກພື້ນທີ່ຫາອາຫານ ຫຼືບ່ອນພັກອາໄສໃນລະດູໜາວ ນັ້ນໝາຍເຖິງການສູນເສຍພະລັງງານໂດຍບໍ່ຈຳເປັນ ໃນຊ່ວງເວລາທີ່ອາຫານມີຈຳກັດຢູ່ແລ້ວ.

ທີ່ມາ: U.S. Fish & Wildlife Service / National Geographic / Alaska Department of Fish and Game

ຂ່າວຕ່າງປະເທດ

◆ **ຂ່າວຕ່າງປະເທດ** · 10:54 ໂມງ · ອ່ານ 13 ຄັ້ງ

ແຟຣນໄຊส์ KFC ລາຍໃຫຍ່ໃນສະຫະລັດ ຍື່ນຂໍລົ້ມລະລາຍ ຫຼັງມີໜີ້ເກືອບ 73 ລ້ານໂດລາ ກະທົບ 84 ສາຂາ



ບໍລິສັດ Tasty Chick’n ຜູ້ປະກອບການແຟຣນໄຊส์ຮ້ານອາຫານຟาสฟูด KFC ແລະ Taco Bell ລາຍໃຫຍ່ໃນສະຫະລັດ ໄດ້ຍື່ນຂໍຄຸ້ມຄອງການລົ້ມລະລາຍຕາມກົດໝາຍ Chapter 11 ຕໍ່ສານລົ້ມລະລາຍໃນເຂດພາກໃຕ້ຂອງລັດ Texas ເມື່ອວັນທີ 16 ພະຈິກ 2026 ຫຼັງປະເຊີນບັນຫายอดขายหดลงต่อเนื่อง 3 ປີ ແລະ ຕົ້ນທຶນດຳເນີນງານເພີ່ມສູງຂຶ້ນ ສິ່ງຜົນໃຫ້ບໍລິສັດມີໜີ້ສິນເກືອບ 73 ລ้านโดลาสะหะลัด ຫຼື ปะมาน 1,637 ตื้กิบ.

ບໍລິສັດ Tasty Chick’n ທີ່ມີສຳນັກງານໃຫຍ่ยู่เมืองย Plano ลัด Texas ละบุในเอกะสานที่ยื่นต่สานว่า ยอดขายของธ้านอาหานหูดลิง ต่เนื่องเป้นปีที่ 3 โดยหูดลิง 11.4% ในปี 2024, หูดลิง 1.4% ในปี 2025 และ หูดลิงอีก 2.8% ในปี 2026 จินเถิงปัดจุบัน. เมื่อลวมไลยะ 3 ปีงิบปะมาน ลายธับจากการขายหูดลิงปะมาน 15.6%.

นอกจากบันหายอดขายแล้ว บໍລິสัดยังปะเชิญกับต้นทึนอัดฐดิบ, ค่าแธงงาน, ค่าดำเนินงาน และ ค่าเช่าที่เพิ่มขึ้น สิ่งผินใต้อัดตากำไลของธ้านอาหานหูดจาก 11.8% ในปีงิบปะมาน 2023 เถือพงๆ 4% ในปี 2026. ขะนะที่กำไลก่อนหักดอกเบ้ย, พาสิ, ค่าเสื่อมลาคา และค่าตัดจำหน่าย (EBITDA) ในไลยะ 12 เดือนหงู้าสุด หูดลิงเถือ 7.1 ล้านโดลา จาก 12.4 ล้านโดลาในปีก่อน.

